# ຄູ່ມືນະໂຍບາຍ ກ່ຽວກັບການຕິດຕາມເງິນໃນ ກໍລະນີ ຄ້າມະນຸດ


## ບາລີ ໂປຣເຊສ໌

ກ່ຽວກັບການລັກລອບເອົາຄົນເຂົ້າ-ອອກປະເທດ, ການຄ້າມະນຸດ ແລະ
ອາຊະຍາກຳຂ້າມຊາດທີ່ກ່ຽວຂ້ອງ


ຄູ່ມືຄຳແນະນຳສຳລັບຜູ້ປະຕິບັດ
ວຽກງານໃນການໃຊ້ກົນໄກສືບສວນ
ສອບສວນເງິນໃນກໍລະນີຄ້າມະນຸດ

**ຄູ່ມືນະໂຍບາຍສະບັບນີ້** ອາດຖືກນຳໃຊ້ໂດຍບັນດາປະເທດທັງໝົດທີ່ເຂົ້າຮ່ວມ ບາລີໂປຣເຊສ໌ , ລວມທັງບັນດາປະເທດທີ່ບໍ່ທັນໄດ້ລົງນາມ ແລະ/ຫຼື ໃຫ້ສັດຕະຍາບັນ ຕໍ່ສົນທິສັນຍາຂອງ ອົງການສະຫະປະຊາຊາດວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ (ສົນທິສັນຍາກ່ຽວກັບອາຊະຍາກຳທີ່ມີການຈັດຕັ້ງ) ແລະອະນຸສັນຍາເພີ່ມເຕີມສອງສະບັບ, ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ໂດຍທາງບົກ, ທະເລ ແລະອາກາດ; ແລະ ອະນຸສັນຍາວ່າດ້ວຍການສະກັດກັ້ນ, ການປາບປາມ ແລະ ການລົງໂທດຜູ້ຄ້າມະນຸດ, ໂດຍສະເພາະແມ່ຍິງແລະເດັກ. ຄຳສັບທີ່ນຳໃຊ້ໃນຄູ່ມືນະໂຍບາຍນີ້ສອດຄ່ອງກັບບັນດານິຕິກຳສາກົນທັງສາມສະບັບນີ້, ເທົ່າທີ່ຈະເປັນໄປໄດ້. ຢ່າງໃດກໍຕາມເພື່ອຈຸດປະສົງຂອງການແປເອກະສານ, ການແປສົນທິສັນຍາແລະອະນຸສັນຍາເຫຼົ່ານີ້ ຢ່າງເປັນທາງການຄວນໄດ້ຮັບການປຶກສາຫາລືເພື່ອເປັນຈຸດອ້າງອີງທີ່ມີສິດອຳນາດ ໃນການນຳໃຊ້ຄຳສັບໃນຄູ່ມືນະໂຍບາຍສະບັບນີ້.




ບາລີໂປຣເຊສ໌ ກ່ຽວກັບ ການລັກລອບເອົາຄົນເຂົ້າ-ອອກປະເທດ, ການຄ້າມະນຸດແລະອາຊະຍາກຳຂ້າມຊາດທີ່ກ່ຽວຂ້ອງ (ຕໍ່ໄປນີ້ເອີ້ນວ່າ ບາລີ ໂປຣເຊສ໌) ໄດ້ຖືກສ້າງຂຶ້ນໃນປີ 2002 ແລະ ແມ່ນຂະບວນການປຶກສາຫາລືດ້ວຍຄວາມສະໝັກໃຈແລະບໍ່ມີຂໍ້ຜູກພັນຊຶ່ງເປັນເຈົ້າການ-ຮ່ວມໂດຍລັດຖະບານອົດສະຕຣາລີແລະອິນໂດເນເຊຍແລະປະກອບມີ 45 ປະເທດສະມາຊິກແລະອົງການຈັດຕັ້ງຕ່າງໆເຂົ້າຮ່ວມ.

ຂໍ້ສົງໄສກ່ຽວກັບຄູ່ມືນະໂຍບາຍນີ້ ຈະຕ້ອງສະເໜີຕໍ່ ຫ້ອງການສົ່ງເສີມໃນພາກພື້ນ (RSO) ສຳລັບ ບາລີໂປຣເຊສ໌ ທີ່:

ອີເມລ: info@rso.baliprocess.net
ເວັບໄຊ້ຂອງ RSO: www.baliprocess.net/regional-support-office
ພິມເຜີຍແຜ່ ເດືອນກໍລະກົດ 2018.

ອອກແບບ ກຣາຟິກ ໂດຍ ລັດຖະບານແຫ່ງປະເທດອົດສະຕຣາລີ ກະຊວງພາຍໃນ.

# ການສະແດງຄວາມຂອບໃຈ

**ຄູ່ມືນະໂຍບາຍສະບັບນີ້** ໄດ້ຖືກສ້າງຂຶ້ນໂດຍສະມາຊິກຂອງ ບາລີ ໂປຣເຊສ໌, ແລະໄດ້ຮັບການຊີ້ນຳໂດຍ **ຄະນະກຳມະການຮ່າງນະໂຍບາຍຂອງ ບາລີ ໂປຣເຊສ໌**, ປະກອບດ້ວຍສະມາຊິກດັ່ງຕໍ່ລົງໄປນີ້:

**ຢູສຟິດລີ ອາດີຢາຄະຊານາ,**
ຮອງຫົວໜ້າ II ກົມຍຶດຊັບສິນຂ້າມຊາດ,
ສູນຍຶດຊັບສິນຂ້າມຊາດ (PPA), ຫ້ອງການອົງການໄອຍະການສູງສຸດ,
ປະເທດອິນໂດເນເຊຍ (ປະທານ-ຮ່ວມ)

---

**ເຄຍເຣີນ ບັດເລີ,**
ທີ່ປຶກສາ (ກົດໝາຍ), ສາຂາອາຊະຍາກຳຂ້າມຊາດ,
ກະຊວງພາຍໃນ, ປະເທດອົດສະຕຣາລີ (ປະທານ-ຮ່ວມ)

---

**Md ມອສເລີມ ອາລີ PPM (ທະນາຍຄວາມລະດັບອາວຸໂສ)**
ພະແນກອາຊະຍາກຳເພີ່ມພິເສດ S.P. (ສຳນັກງານໃຫຍ່ກົມຕຳຫຼວດ),
ກົມຕຳຫຼວດບັງກລາເທດ, ປະເທດບັງກລາເທດ

---

**ມາຣີອາ ໂຣຊີນີ ແຟງໂກ,**
ຜູ້ຊ່ວຍພິເສດ,
ຫ້ອງການຮອງລັດຖະມົນຕີແຮງງານຕ່າງຊາດ,
ກະຊວງການຕ່າງປະເທດ, ປະເທດຟີລິບປິນ

---

**ເຣໂຊລ ຈອຍ ປານອງ,**
ເຈົ້າໜ້າທີ່ກົດໝາຍ,
ຫ້ອງການຮອງລັດຖະມົນຕີແຮງງານຕ່າງຊາດ,
ກະຊວງການຕ່າງປະເທດ, ປະເທດຟີລິບປິນ

---

**ຊິນທິຊາ ດາວເຮືອງ,**
ຫົວໜ້າກົມກົດໝາຍ
ຫ້ອງການຕໍ່ຕ້ານ-ການຟອກເງິນ, ປະເທດໄທ

---

**ສິຣິຢຸດ ວິເວກ,**
ຜູ້ສືບສວນສອບສວນລະດັບອາວຸໂສ, ກົມພົວພັນຕ່າງປະເທດ
ຫ້ອງການຕໍ່ຕ້ານ-ການຟອກເງິນ, ປະເທດໄທ

---

ຄຣິສ ແບັດ,
ທີ່ປຶກສາດ້ານຕໍ່ຕ້ານ-ການຟອກເງິນແລະຕ້ານ-ການເງິນຂອງຂະບວນກໍ່ການຮ້າຍຂ້າມຊາດ
ຫ້ອງການສະຫະປະຊາຊາດກ່ຽວກັບຢາເສບຕິດແລະອາຊະຍາກຳ

---

**ໄມໂຄລ ແພັດຕີ,**
ທີ່ປຶກສາດ້ານບັງຄັບໃຊ້ກົດໝາຍ,
ທີມງານຜູ້ຊ່ວຍດ້ານຕໍ່ຕ້ານ-ການຟອກເງິນ,
ກະຊວງພາຍໃນ, ປະເທດອົດສະຕຣາລີ

---

**ເຣເບັກກາ ມິລສ໌,**
ຮອງຫົວໜ້າກົມ,
ພະແນກຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດແລະຄ້າມະນຸດ,
ກະຊວງພາຍໃນ, ປະເທດອົດສະຕຣາລີ

---

ຂໍ້ສົງໄສກ່ຽວກັບຄູ່ມືນະໂຍບາຍນີ້ ຈະຕ້ອງສະເໜີຕໍ່ **bali.process.tipwg@homeaffairs.gov.au**

# ຄຳນຳ

**ນັບແຕ່ໄດ້ມີການເລີ່ມຕົ້ນໃນປີ 2002 ເປັນຕົ້ນມາ** ບາລີ ໂປຣເຊສ ກ່ຽວກັບການລັກລອບເອົາຄົນເຂົ້າ-ອອກປະເທດ, ການຄ້າມະນຸດແລະອາຊະຍາກຳທີ່ກ່ຽວຂ້ອງ (ບາລີ ໂປຣເຊສ) ໄດ້ປູກຈິດສຳນຶກໃນພາກພື້ນກ່ຽວ ກັບຜົນສະທ້ອນຂອງການລັກລອບເອົາຄົນເຂົ້າ-ອອກປະເທດ, ການຄ້າມະນຸດແລະອາຊະຍາກຳຂ້າມຊາດທີ່ກ່ຽວຂ້ອງ, ແລະໄດ້ພັດທະນາແລະຈັດຕັ້ງປະຕິບັດບັນດາຍຸດທະສາດແລະການຮ່ວມມືໃນພາກປະຕິບັດຕົວຈິງເພື່ອຮັບມືກັບສະພາບການ. ໂດຍການເປັນປະທານ-ຮ່ວມຂອງອິນໂດເນເຊຍແລະອົດສະຕຣາລີ, ບາລີ ໂປຣເຊສໄດ້ມີສະມາຊິກຫຼາຍກວ່າ 48 ປະເທດ, ລວມທັງ ສຳນັກງານຂ້າຫຼວງໃຫຍ່ຜູ້ລີ້ໄພແຫ່ງສະຫະປະຊາຊາດ (UNHCR), ອົງການສາກົນເພື່ອການຍົກຍ້າຍຖິ່ນຖານ (IOM) ແລະ ຫ້ອງການອົງການສະຫະປະຊາຊາດ ຕ້ານຢາເສບຕິດແລະອາຊະຍາກຳ (UNODC), ພ້ອມດ້ວຍປະເທດສັງເກດການຈຳນວນໜຶ່ງ ແລະ ບັນດາອົງກອນສາກົນຕ່າງໆ.

ທີ່ກອງປະຊຸມຄະນະລັດຖະມົນຕີປະຈຳພາກພື້ນຄັ້ງທີຫົກຂອງ ບາລີ ໂປຣເຊສ ໃນເດືອນມີນາ 2016 ຜ່ານມາ, ບັນດາລັດຖະມົນຕີໄດ້ໃຫ້ຄວາມສຳຄັນຕໍ່ພັນທະຂອງປະເທດຕ່າງໆ ໃນການເຮັດໃຫ້ການຟອກເງິນແລະລາຍໄດ້ຈາກອາຊະຍາກຳເປັນການກະທຳຜິດທາງອາຍາ, ໂດຍແນໃສ່ແຮງຈູງໃຈທາງການເງິນຕໍ່ການລັກລອບເອົາຄົນເຂົ້າ-ອອກປະເທດແລະການຄ້າມະນຸດ, ແລະໄດ້ສະເໜີວ່າໃຫ້ ກຸ່ມຮັບຜິດຊອບວຽກງານການຄ້າມະນຸດຂອງບາລີ ໂປຣເຊສ (ກຸ່ມເຮັດວຽກ) ເປັນຜູ້ຈັດການຝຶກອົບຮົມແລະຊຸນຄູ່ມືສຳລັບພາກພື້ນກ່ຽວກັບຫົວຂໍ້ນີ້. ດັ່ງນັ້ນ, ໃນເດືອນ ພຶດສະພາ 2016, ກຸ່ມເຮັດວຽກໄດ້ຈັດໃຫ້ມີ ເວທີປຶກສາຫາລື ເລື່ອງ ຕິດຕາມເງິນຂອງ ບາລີ ໂປຣເຊສ ຂຶ້ນ, ເຊິ່ງໄດ້ສະເໜີໃຫ້ກຸ່ມເຮັດວຽກ ຊຸນຄູ່ມືນະໂຍບາຍຂອງພາກພື້ນ (ຄູ່ມື) ຂຶ້ນ ແລະ ຊຸນແບບການຝຶກທີ່ກ່ຽວຂ້ອງໃນການໃຊ້ເຄື່ອງມືສືບສວນສອບສວນເງິນໃນກໍລະນີຄ້າມະນຸດ.

ຢູ່ທີ່ກອງປະຊຸມປະຈຳປີຄັ້ງທີສອງຂອງກຸ່ມ ໃນເດືອນພຶດສະພາ 2016, ກຸ່ມເຮັດວຽກ ໄດ້ເຫັນດີປະຕິບັດຕາມຂໍ້ແນະນຳພາຍໃຕ້ *ແຜນປະຕິບັດວຽກງານຂ້າງໜ້າ ສຳລັບປີ 2016–17* ແລະໄດ້ກໍ່ຕັ້ງ ຄະນະກຳມະການຮ່າງເອກະສານຂຶ້ນ ໂດຍການເປັນປະທານ-ຮ່ວມຂອງລັດຖະບານແຫ່ງສາທາລະນະລັດອິນໂດເນເຊຍແລະປະເທດອົດສະຕຣາລີເພື່ອຮ່າງຄູ່ມືນີ້. ຄະນະກຳມະການຮ່າງເອກະສານປະກອບດ້ວຍຜູ້ຊ່ຽວຊານໃນເລື່ອງຕ້ານ-ການຟອກເງິນແລະການຄ້າມະນຸດຈາກປະເທດອົດສະຕຣາລີ, ບັງ ກລາເທດ, ອິນໂດເນເຊຍ, ຟີລິບປິນ, ໄທ ແລະ ຫ້ອງການຂອງອົງການສະຫະປະຊາຊາດຕ້ານຢາເສບຕິດແລະອາຊະຍາກຳ (UNODC). ຮ່າງເອກະສານຂອງຄູ່ມືໄດ້ຖືກສະໜອງໂດຍສະມາຊິກຂອງ ບາລີ ໂປຣເຊສ ແລະຜູ້ສັງເກດການເພື່ອໃຫ້ຄຳເຫັນເປັນລາຍລັກອັກສອນແລະປຶກສາຫາລືກັນໃນກອງປະຊຸມປຶກສາຫາລືຄົບຄະນະຂອງ ບາລີ ໂປຣເຊສ ເຊິ່ງຈັດຂຶ້ນໃນວັນທີ 23–24 ພຶດສະພາ 2017 ທີ່ ບາລີ, ປະເທດອິນໂດເນເຊຍ. ການຊຸນຄູ່ມືໄດ້ເປັນຜົນສຳເລັດລົງໃນເວລາຕໍ່ມາ, ແລະໄດ້ຖືກຮັບຮອງເອົາໃນເດືອນຕຸລາ 2017 ທີ່ກອງປະຊຸມສະເພາະກິດຂອງຄະນະເຈົ້າໜ້າທີ່ທາງການອາວຸໂສຂອງ ບາລີ ໂປຣເຊສ.

ຄູ່ມືນີ້ແມ່ນອີງໃສ່ຄວາມສະໝັກໃຈ, ບໍ່ມີການບັງຄັບ ແລະມີຈຸດປະສົງໃຊ້ເປັນເຄື່ອງມືອ້າງອີງສຳລັບເຈົ້າໜ້າທີ່ ທີ່ປະຕິບັດວຽກງານດ້ານກົດໝາຍແລະຄວາມຍຸຕິທຳ ເຊິ່ງມີໜ້າທີ່ຮັບຜິດຊອບສືບສວນສອບສວນແລະດຳເນີນຄະດີກໍລະນີຄ້າມະນຸດໃນປະເທດທີ່ເປັນສະມາຊິກຂອງ ບາລີ ໂປຣເຊສ.

## ຄໍາຫຍໍ້ແລະຄວາມໝາຍ

| | |
|---|---|
| ARIN-AP | ເຄືອຂ່າຍອົງກອນຮ່ວມກ່ຽວກັບການຍຶດຊັບສິນ - ເອເຊຍ ປາຊີຟິກ |
| ASEAN | ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ |
| Bali Process | ບາລີໂປຣເຊສໂຄງການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ, ການຄ້າມະນຸດ ແລະ ອາຊະຍາກໍາຂ້າມຊາດທີ່ກ່ຽວຂ້ອງ |
| FATF | ຄະນະກໍາມະການສະເພາະກິດເພື່ອດໍາເນີນມາດຕະການທາງການເງິນຕ້ານການຟອກເງິນ |
| FIU | ໜ່ວຍຂ່າວກອງດ້ານການເງິນ |
| ILO | ອົງການສາກົນເພື່ອການເຄື່ອນຍ້າຍແຮງງານ |
| IOM | ອົງການສາກົນເພື່ອການຍົກຍ້າຍຖິ່ນຖານ |
| MOU | ບົດບັນທຶກຄວາມເຂົ້າໃຈ |
| NGO | ອົງກອນທີ່ບໍ່ແມ່ນ-ລັດຖະບານ |
| **ສົນທິສັນຍາວ່າດ້ວຍອາຊະຍາກໍາທີ່ມີການຈັດຕັ້ງ** | ສົນທິສັນຍາສະຫະປະຊາຊາດວ່າດ້ວຍການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ |
| RSO | ຫ້ອງການສະໜັບສະໜູນໃນພາກພື້ນຂອງບາລີ ໂປຣເຊສ໌ |
| **ອະນຸສັນຍາວ່າດ້ວຍການຄ້າມະນຸດ** | ອະນຸສັນຍາວ່າດ້ວຍການສະກັດກັ້ນ, ປາບປາມແລະລົງໂທດຜູ້ຄ້າມະນຸດ, ໂດຍສະເພາະແມ່ຍິງແລະເດັກ, ເພີ່ມເຕີມເຂົ້າໃນ ສົນທິສັນຍາສະຫະປະຊາຊາດວ່າດ້ວຍການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ |
| UN | ສະຫະປະຊາຊາດ |
| UNHCR | ສໍານັກງານຂ້າຫຼວງໃຫຍ່ຜູ້ລີ້ໄພແຫ່ງສະຫະປະຊາຊາດ |
| UNODC | ຫ້ອງການຂອງອົງການສະຫະປະຊາຊາດຕ້ານຢາເສບຕິດແລະອາຊະຍາກໍາ |

# ສາລະບານ


ບົດສະຫຼຸບ ຜູ້ບໍລິຫານ ...4

**ພາກທີ 1: ເຫດຜົນ** ...**6**

1.1 'ການຕິດຕາມເງິນ' ໝາຍເຖິງຫຍັງ? ...6

1.2 ເປັນຫຍັງຈຶ່ງຕ້ອງຕິດຕາມເງິນ? ...6

1.3 ການຄ້າມະນຸດມີມູນຄ່າເທົ່າໃດ? ...7

1.4 ແນວຄິດແບບໃໝ່ —ໂອກາດແລະສິ່ງ ທ້າທາຍ ...7

1.5 ກໍລະນີສຶກສາ ...8

**ພາກທີ 2: ກອບວຽກດ້ານກົດໝາຍ** ...**9**

2.1 ມາດຕະຖານສາກົນ ...9

2.2 ກົດທີ່ຄວບຄຸມການກະທຳຜິດຖານຟອກເງິນໄດ້ຢ່າງສົມບູນຮອບດ້ານ ...9

2.3 ກອບວຽກສຳລັບການຍຶດຊັບທີ່ມີປະສິດທິຜົນ ...10

2.4 ມີຊັບສິນຫຍັງທີ່ສາມາດຖືກກັກຫຼືຍຶດໄດ້? ...11

**ພາກທີ 3: ວິທີການຟອກເງິນທີ່ກ່ຽວຂ້ອງກັບການຄ້າມະນຸດ** ...**12**

3.1 ການຟອກເງິນແມ່ນເຮັດວິທີໃດ? ...12

3.2 ວິທີການທົ່ວໄປໃນການຟອກເງິນ ...13

3.3 ການຟອກເງິນໃນກໍລະນີຄ້າມະນຸດ ...14

**ພາກທີ 4: ໜ່ວຍສືບສວນເລື່ອງເງິນ (FIUs)** ...**15**

4.1 ລັດຖະບານລະບຸກົດຈະກຳການຟອກເງິນ ວິທີໃດ? ...15

4.2 FIUs ມີພາລະບົດບາດຫຍັງ? ...16

4.3 FIU ຂອງທ່ານຈະສະໜັບສະໜູນການສືບສວນສອບສວນຂອງທ່ານໄດ້ຢ່າງໃດ? ...16

4.4 ກໍລະນີສຶກສາ ...18

**ພາກທີ 5: ການສືບສວນ ສອບສວນ** ...**20**

5.1 ການສືບສວນສອບສວນເລື່ອງເງິນແມ່ນຫຍັງ? ...20

5.2 ທ່ານຈະສະແດງໃຫ້ເຫັນໄດ້ຢ່າງໃດວ່າເງິນໄດ້ຖືກຍົກຍ້າຍວິທີໃດແລະຖືກຍ້າຍໄປໃສ? ...20

5.3 ການເກັບກຳຂໍ້ມູນແລະຫຼັກຖານ ...21

5.4 ກໍລະນີສຶກສາ ...24

**ພາກທີ 6: ການຮ່ວມມື ສາກົນ** ...**25**

6.1 ເປັນຫຍັງການຮ່ວມມືສາກົນຈຶ່ງສຳຄັນ? ...25

6.2 ຮູບແບບຮ່ວມມືສາກົນທີ່ນຳມາໃຊ້ທົ່ວໄປເພື່ອສະໜັບສະໜູນການສືບສວນສອບສວນເງິນ ...25

6.3 ຂໍ້ພິຈາລະນາທີ່ສຳຄັນ ...26

**ພາກທີ 7: ວິທີການຈ່າຍເງິນແບບໃໝ່** ...**28**

**ພາກທີ 8: ຂໍ້ສະຫຼຸບຄຳແນະນຳ** ...**29**






# ບົດສະຫຼຸບ ຜູ້ບໍລິຫານ

ການຄ້າມະນຸດແມ່ນອາຊະຍາກຳຮ້າຍແຮງເຊິ່ງເຮັດໃຫ້ມີຜົນກະທົບຢ່າງຮຸນແຮງຕໍ່ສິດທິມະນຸດ. ນອກນັ້ນ ມັນກໍຍັງເປັນຕົວແບບການຄ້າຢ່າງໜຶ່ງທີ່ໄດ້ຜົນກຳໄລທີ່ດີທີ່ສຸດຂອງອາຊະຍາກຳທີ່ມີການຈັດຕັ້ງ. ເປັນທີ່ຄາດຄະເນວ່າມັນແມ່ນແຫຼ່ງລາຍໄດ້ຜິດກົດໝາຍທີ່ໃຫຍ່ເປັນທີສອງໃນໂລກ, ເຊິ່ງລ້ຳໜ້າໄປໄດ້ກໍມີແຕ່ພຽງການຄ້າຢາເສບຕິດເທົ່ານັ້ນ.[1] ອົງການສາກົນເພື່ອການເຄື່ອນຍ້າຍແຮງງານ ໄດ້ສັນນິຖານວ່າການບັງຄັບໃຊ້ແຮງງານແລະການຄ້າມະນຸດແມ່ນອຸດສາຫະກຳທີ່ມີມູນຄ່າເຖິງ US$150 ຕື້ ຕໍ່ປີທົ່ວມຸມໂລກ.[2]

ເຖິງແມ່ນວ່າຈະມີການຮັບຮູ້ວ່າມີການແຜ່ຫຼາຍແລະມີຜົນກະທົບອັນຮ້າຍແຮງຈາກການຄ້າມະນຸດ, ອັດຕາການໃສ່ໂທດຜູ້ກະທຳຜິດທົ່ວໂລກຍັງຕ່ຳ. ການຕິດຕາມເງິນສາມາດຊ່ວຍນຳຮອຍການໝູນວຽນຂອງຜົນກຳໄລທີ່ຜິດກົດໝາຍ, ລະບຸຜູ້ກະທຳຜິດແລະຜູ້ຮັບເຄາະ, ເກັບກຳຫຼັກຖານທີ່ສາມາດຊ່ວຍໃນການດຳເນີນຄະດີ, ແລະເຮັດໃຫ້ສາມາດຍຶດຊັບສິນເພື່ອຍາດແຍ່ງເອົາຜົນກຳໄລທີ່ຜິດກົດໝາຍອອກມາຈາກພວກເຄືອຂ່າຍອາຊະຍາກຳນີ້. ຄູ່ມືນະໂຍບາຍນີ້ ໄດ້ກຳນົດວິທີທາງຕ່າງໆໃນການຊຸກຍູ້ການບັງຄັບໃຊ້ກົດໝາຍເພື່ອຕອບຮັບການຄ້າມະນຸດດ້ວຍວິທີການ ‘ຕິດຕາມເງິນ’ - ໂດຍການໃຊ້ວິທີຕ້ານການຟອກເງິນແລະເຕັກນິກຕ່າງໆໃນການຍຶດຊັບ.

ລັດຖະບານປະເທດຕ່າງໆມີພັນທະໃນການຕໍ່ສູ້ກັບການຟອກເງິນແລະຍຶດຊັບທີ່ໄດ້ຈາກອາຊະຍາກຳ, ເຊິ່ງໄດ້ກຳນົດຂຶ້ນໂດຍຄະນະກຳມະການສະເພາະກິດ ເພື່ອດຳເນີນມາດຕະການທາງການເງິນຕ້ານການຟອກເງິນ (FATF) ແລະໄດ້ຖືກບັນຈຸໄວ້ຢູ່ໃນສົນທິສັນຍາຫຼາຍສະບັບຂອງສົນທິສັນຍາຂອງອົງການ ສະຫະປະຊາຊາດ. ອັນນີ້ ລວມເຖິງຄວາມຈຳເປັນທີ່ຈະຕ້ອງມີບົດບາດທີ່ສົມບູນຮອບດ້ານຕໍ່ການກະທຳຜິດຖານຟອກເງິນ, ແລະຕ້ອງກໍ່ຕັ້ງລະບອບທີ່ມີປະສິດທິຜົນສຳລັບການໂຈະ, ຈັບ ແລະ ຍຶດ ຊັບສິນຈາກອາຊະຍາກຳ.

ຄູ່ມືນະໂຍບາຍນີ້ ບັນລະຍາຍເຖິງຂະບວນການຟອກເງິນແລະວິທີການທົ່ວໄປທີ່ເຄືອຂ່າຍອາຊະຍາກຳຄ້າມະນຸດນຳມາໃຊ້, ເຊິ່ງລາຍງານອີງຕາມປະສົບການຂອງບັນດາປະເທດສະມາຊິກຂອງ ບາລີ ໂປຣເຊສ໌. ໂດຍການຮັບຮູ້ວ່າພາລະໜ້າທີ່ຫຼັກຂອງໜ່ວຍຂາວກອງດ້ານການເງິນ (FIUs) ແມ່ນການສະໜັບສະໜູນວິທີການ ‘ຕິດຕາມເງິນ’, ຄູ່ມືນີ້ສະໜອງ ກົນລະຍຸດ ໃນການຊຸກຍູ້ການຮ່ວມໄມ້ຮ່ວມມືລະຫວ່າງອົງກອນກົດໝາຍແລະຄວາມຍຸຕິທຳແລະ FIUs. ນອກນີ້ ຄູ່ມືນີ້ຍັງຈະນຳພາໄປສູ່ບາດກ້າວທີ່ສຳຄັນຂອງການສືບສວນສອບສວນການເງິນ, ລວມທັງການໃຊ້ກົນໄກການຮ່ວມໄມ້ຮ່ວມມືສາກົນ, ໂດຍໃຫ້ຄຳແນະນຳດ້ານການປະຕິບັດໂຕຈິງທີ່ໄດ້ຜົນດີແລະຈາກກໍລະນີສຶກສາ.

ຄູ່ມືນີ້ໄດ້ສະເໜີໃຫ້ໃຊ້ເປັນສິ່ງອ້າງອີງເພື່ອໃຫ້ຜູ້ປະຕິບັດງານໄດ້ເສີມຂະຫຍາຍກົນໄກເຄື່ອງມືທີ່ເຂົາເຈົ້າໃຊ້ຢູ່ເພື່ອຕໍ່ສູ້ກັບການຄ້າມະນຸດ, ໂດຍການສຸມໃສ່ຕົວຈິງດ້ານເສດຖະກິດທີ່ອາຊະຍາກຳຊະນິດນີ້ໄດ້ຮັບແຮງຈູງໃຈຈາກຜົນກຳໄລ. ອັນນີ້ແມ່ນສູນລວມອັນໃໝ່ສຳລັບ ບາລີ ໂປຣເຊສ໌, ແລະ ເປັນສິ່ງທີ່ສອດຄ່ອງກັບການຮັບຮູ້ທີ່ນັບມື້ສູງຂຶ້ນຈາກທົ່ວມຸມໂລກທີ່ຮັບຮູ້ການນຳໃຊ້ກົນໄກການສືບສວນສອບສວນການເງິນເພື່ອທຳລາຍອາຊະຍາກຳຂ້າມຊາດແລະແນເປົ້າໝາຍໃສ່ໃນສິ່ງທີ່ກຸ່ມອາຊະຍາກອນເຫັນວ່າເປັນຄຸນຄ່າສູງສຸດ - ນັ້ນກໍຄືຜົນກຳໄລຂອງຄົນກຸ່ມນີ້ ນັ້ນເອງ.[3]

1 http://digitalcommons.ilr.cornell.edu/cgi/viewcontent.cgi?article=1016&context=forcedlabor

2 http://www.ilo.org/wcmsp5/groups/public/---ed_norm/---declaration/documents/publication/wcms_243391.pdf

3 ຍົກຕົວຢ່າງ, ສະພາຄວາມໝັ້ນຄົງແຫ່ງ ສປຊ ໄດ້ອອກ ຍັດຕິຄັ້ງທຳອິດ (2331) ກ່ຽວກັບການຄ້າມະນຸດແລະຂ້າທາດ ໃນວັນທີ 20 ເດືອນທັນວາ 2016, ສົ່ງເສີມ FATF, ໃຫ້ມີການຈັດຕັ້ງອົງການປະຈຳພາກພື້ນແລະຂັ້ນລະດັບປະເທດແບບ FATF ເພື່ອເອົາບາດກ້າວຫຼາຍຮູບແບບເພື່ອສ້າງພະລັງຄວາມເຂັ້ມແຂງໃນການທຳລາຍການໝູນວຽນຂອງເງິນທີ່ກ່ຽວພັນກັບການຄ້າມະນຸດແລະຂ້າທາດສະໄໝໃໝ່.

# ໝວດທີ 1: ເງິນ

## 1.1 'ການຕິດຕາມເງິນ' ໝາຍເຖິງຫຍັງ?

ເງິນແມ່ນເລືອດທີ່ຊຸບລ້ຽງຊີວິດຂອງອາຊະຍາກຳທີ່ມີການຈັດຕັ້ງ. ໃນໄລຍະຜ່ານມາ, ອາຊະຍາກຳໄດ້ກາຍມາຢູ່ໃນສະພາບທີ່ຄົບຖ້ວນ ແລະໃນຂັ້ນລະດັບສາກົນ, ແລະບັນດາອາຊະຍາກອນກໍຊອກພົບວິທີໃໝ່ໆຢ່າງຕໍ່ເນື່ອງເພື່ອປົກປິດລາຍໄດ້ທີ່ໄດ້ມາຈາກອາຊະຍາກຳ. ເພື່ອເປັນການຕອບໂຕ້, ອົງກອນກົດໝາຍແລະຍຸຕິທຳ ກຳລັງເພີ່ມທະວີການນຳໃຊ້ວິທີການ 'ຕິດຕາມເງິນ' ໃນການຕໍ່ສູ້ກິດຈະກຳອາຊະຍາກຳທີ່ຮ້າຍແຮງແລະມີການຈັດຕັ້ງ. ອັນນີ້ແມ່ນກວມເອົາການສຸມໃສ່ແງ່ມຸມດ້ານການເງິນຂອງອາຊະຍາກຳ.

ການສືບສວນສອບສວນດ້ານການເງິນໝາຍເຖິງການສືບສວນສອບສວນໃດໆທີ່ເຈາະເລິກເຂົ້າເບິ່ງການເງິນຂອງບຸກຄົນຜູ້ໜຶ່ງ, ຂອງຄົນກຸ່ມໜຶ່ງຫຼືທຸລະກິດ. ຈຸດປະສົງຫຼັກຂອງການສືບສວນສອບສວນແມ່ນເພື່ອລະບຸແລະບັນທຶກການເຄື່ອນໄຫວຂອງເງິນໃນຊ່ວງຂອງກິດຈະກຳດ້ານອາຊະຍາກຳທີ່ມີພຶດຕິກຳໜ້າສົງໄສ, ໂດຍຈຸດປະສົງສູງສຸດແມ່ນສືບໃຫ້ຮູ້ແລະດຳເນີນຄະດີພວກອາຊະຍາກອນເຫຼົ່ານັ້ນແລະຍຶດລາຍໄດ້ຈາກອາຊະຍາກຳ. ການເຊື່ອມຕໍ່ລະຫວ່າງແຫຼ່ງທີ່ມາຂອງເງິນ, ຜູ້ໄດ້ຮັບຜົນປະໂຫຍດ, ເງິນໄດ້ຮັບເວລາໃດ, ແລະມັນຖືກເກັບຫຼືຝາກໄວ້ຢູ່ໃສ, ສິ່ງເຫຼົ່ານີ້ສາມາດສະໜອງຂໍ້ມູນອັນລ້ຳຄ່າກ່ຽວກັບຫຼັກຖານຂອງກິດຈະກຳຂອງອາຊະຍາກຳ.

ວິທີການ 'ຕິດຕາມເງິນ' ມີສອງສ່ວນປະກອບທີ່ສຳຄັນ: ຍຸດທະສາດຕ້ານ-ການຟອກເງິນແລະກົນໄກຍຶດຊັບສິນ. ການຟອກເງິນແມ່ນການກະທຳຄວາມຜິດດ້ານອາຊະຍາກຳໂດຍການຂ້ອງກ່ຽວ ກັບລາຍໄດ້ຂອງອາຊະຍາກຳເພື່ອປົກປິດເອກະລັກສະແດງໂຕ, ແຫຼ່ງທີ່ມາ, ການເປັນເຈົ້າຂອງຫຼືປາຍທາງຂອງເງິນທີ່ໄດ້ມາຢ່າງຜິດກົດໝາຍ. ການຍຶດຊັບສິນແມ່ນຂະບວນການສຳລັບການສືບສວນສອບສວນ, ຍັບຍັ້ງແລະຍຶດລາຍໄດ້ຂອງອາຊະຍາກຳທຸກຮູບແບບ.

## 1.2 ເປັນຫຍັງຈຶ່ງຕ້ອງຕິດຕາມເງິນ?

ເຊັ່ນດຽວກັບບັນດາອາຊະຍາກຳທີ່ມີການຈັດຕັ້ງອື່ນໆ, ເຄືອຂ່າຍຄ້າມະນຸດໃຊ້ວິທີການຟອກເງິນຫຼາຍແບບ ເພື່ອປົກປິດແຫຼ່ງທີ່ມາຂອງຜົນກຳໄລທີ່ຜິດກົດໝາຍຂອງພວກເຂົາແລະເຮັດໃຫ້ ການດຳເນີນທຸລະກິດຂອງພວກເຂົາມີຄວາມສຳເລັດ. ເພາະສະນັ້ນ, ຈຶ່ງເປັນປະໂຫຍດໃນການນຳເອົາວິທີການ 'ຕິດຕາມເງິນ' ມາໃຊ້ໃນກໍລະນີການຄ້າມະນຸດ.

- ການນຳຮອຍເບິ່ງການໝູນວຽນເງິນທີ່ກ່ຽວພັນກັບການຄ້າມະນຸດສາມາດຊ່ວຍຜູ້ສືບສວນສອບສວນໃຫ້ລະບຸສະມາຊິກແລະຜູ້ຮັບເຄາະຂອງເຄືອຂ່າຍອາຊະຍາກຳແລະເກັບກຳຫຼັກຖານທີ່ສາມາດຊ່ວຍໃນການດຳເນີນຄະດີ.
  - ວິທີນີ້ສາມາດຊ່ວຍຫຼຸດຜ່ອນການອີງໃສ່ແຕ່ການເປັນປະຈັກພະຍານຂອງຜູ້ຮັບເຄາະ.
  - ນອກນີ້ ມັນຍັງສາມາດຊ່ວຍໃຫ້ລະບຸບັນດາໂຕການທີ່ສຳຄັນແລະຜູ້ຮັບຜົນປະໂຫຍດຂອງເຄືອຂ່າຍທີ່ຜິດກົດໝາຍ, ແມ່ນໃຜໄດ້ປະໂຫຍດຈາກເຄືອຂ່າຍນີ້, ແຕ່ວ່າແຍກຕົນເອງໃຫ້ຫ່າງຈາກອາຊະຍາກຳ.
- ການກະທຳຄວາມຜິດດ້ານຟອກເງິນສາມາດສະໜອງທົນທາງອື່ນສຳລັບການດຳເນີນຄະດີກັບອາຊະຍາກອນທີ່ກ່ຽວພັນກັບການຄ້າມະນຸດ. ອັນນີ້ຈະເປັນປະໂຫຍດເມື່ອບໍ່ມີຫຼັກຖານພຽງພໍທີ່ຈະຕັ້ງຂໍ້ຫາເພື່ອດຳເນີນຄະດີ ໂດຍອີງໃສ່ການກະທຳຜິດດ້ານການຄ້າມະນຸດໄດ້. ນອກນີ້ ມັນກໍຍັງສາມາດເປີດໂປງການເຮັດຜິດກົດລະບຽບດ້ານການເງິນອື່ນໆ.
- ການຍຶດເອົາຜົນກຳໄລທີ່ໄດ້ມາ ສາມາດເປັນຜົນກໍ່ໃຫ້ເກີດຄວາມລັງເລໄດ້, ສາມາດຍັບຍັ້ງຜູ້ກະທຳຜິດທີ່ອາດພ້ອມທີ່ຈະສ່ຽງຍອມຕິດຄຸກຖ້າເຂົາໝັ້ນໃຈວ່າຜົນກຳໄລທີ່ໄດ້ມາຈາກອາຊະຍາກຳນັ້ນຍັງຈະມີໄວ້ລໍຖ້າເມື່ອຖືກປ່ອຍອອກຈາກຄຸກ.
- ການຍຶດເອົາລາຍໄດ້ຈາກການຄ້າມະນຸດຢ່າງມີປະສິດທິຜົນສາມາດປ້ອງກັນບໍ່ໃຫ້ຜົນກຳໄລນັ້ນຖືກນຳໄປລົງທຶນໃໝ່ອີກໃນກິດຈະກຳອາຊະຍາກຳແລະເຮັດໃຫ້ສາມາດນຳເອົາລາຍໄດ້ນັ້ນມາໃຊ້ເພື່ອປັບປຸງວຽກງານຄວາມພະຍາຍາມໃນການຕ້ານ-ການຄ້າມະນຸດແລະໃຫ້ການສະໜັບສະໜູນອູ້ມຊູແກ່ຜູ້ຮັບເຄາະ.
- ການຈັດຕັ້ງປະຕິບັດກອບວຽກທີ່ແນໃສ່ ການບໍ່ຕ້ອງ-ລົງອາຍາກ່ອນ ແຕ່ແນໃສ່ການຍຶດຊັບສິນ[4] ສາມາດເປັນຜົນໃຫ້ໄດ້ຮັບຜົນທີ່ດີຂຶ້ນຢ່າງຫຼວງຫຼາຍຕໍ່ການຕ້ານອາຊະຍາກຳທົ່ວທຸກຮູບແບບ, ລວມທັງການຄ້າມະນຸດ. ຍຸດທະວິທີເຫຼົ່ານີ້ສະໜອງໂອກາດທີ່ດີຂຶ້ນສຳລັບບັນປະເທດຕ່າງໆໃນການແນໃສ່ພວກທີ່ໄດ້ຮັບຜົນປະໂຫຍດແຕ່ແຍກໂຕເອງອອກຫ່າງຈາກພຶດຕິກຳອາຊະຍາກຳໂດຍບໍ່ຈຳເປັນຕ້ອງມີການການລົງໂທດທາງອາຍາ.

4 ມີສອງວິທີເຊິ່ງລາຍໄດ້ຈາກອາຊະຍາກຳສາມາດຖືກຍຶດໄດ້: ການຍຶດຊັບຈາກການລົງໂທດທາງອາຍາ, ເຊິ່ງອຳນວຍໃຫ້ມີການຍຶດຊັບສິນທີ່ກ່ຽວພັນກັບອາຊະຍາກຳໄດ້ ຫຼັງຈາກທີ່ອາຊະຍາກຳນັ້ນໄດ້ຖືກລົງອາຍາແລ້ວ; ແລະການຍຶດຊັບໂດຍບໍ່ມີ-ການລົງໂທດ (ຫຼືແພ່ງ), ເຊິ່ງອະນຸຍາດ ໃຫ້ມີການຍັບຍັ້ງແລະຍຶດເອົາຊັບສິນທີ່ສົງໄສວ່າຕົ້ນຕໍແມ່ນມາຈາກອາຊະຍາກຳ ໂດຍບໍ່ຈຳເປັນຕ້ອງລົງອາຍາກ່ອນ.





## 1.3 1.3 ການຄ້າມະນຸດມີມູນຄ່າເທົ່າໃດ?

**ການຄ້າມະນຸດແມ່ນທຸລະກິດທີ່ລໍ່າລວຍຊຶ່ງປະພຶດກັນລະດັບໂລກ. ໃນປີ** 2014, **ຫ້ອງການຍົກຍ້າຍແຮງງານສາກົນ** (ILO) ສັນນິຖານວ່າຜົນກໍາໄລຜິດກົດໝາຍທີ່ໄດ້ມາຈາກການຄ້າມະນຸດແລະຂ້າທາດທົ່ວໂລກແມ່ນຕົກຢູ່ US$150.2 ຕື້ຕໍ່ປີ.[5] ເກືອບສອງສ່ວນສາມຂອງຜົນກໍາໄລ —US$99 ຕື້—ແມ່ນມາຈາກການບັງຄັບໃຫ້ຄ້າປະເວນີ.[6] ການສວຍໃຊ້ແຮງງານທີ່ບໍ່ກ່ຽວ-ກັບວຽກແມ່ບ້ານ ສ້າງຜົນກໍາໄລໄດ້ US$43.4 ຕື້ ແລະ ເກືອບ US$8 ຕື້ແມ່ນມາຈາກການສວຍໃຊ້ແຮງງານຄົນງານເຮັດວຽກແມ່ບ້ານ. ຜົນກໍາໄລທີ່ໄດ້ສູງສຸດແມ່ນຢູ່ໃນເອເຊຍ, ຊຶ່ງຜູ້ຮັບເຄາະເກືອບທັງໝົດມາຈາກເຂດນີ້. ຜົນກໍາໄລແຕ່ລະປີຕໍ່ຜູ້ຮັບເຄາະແຕ່ລະຄົນແມ່ນສູງສຸດໃນເຂດທີ່ມີການພັດທະນາດ້ານເສດຖະກິດ (ປະມານ US$34,800 ຕໍ່ຜູ້ຮັບເຄາະໜຶ່ງຄົນ).

## 1.4 ແນວຄິດແບບໃໝ່ —ໂອກາດແລະສິ່ງ ທ້າທາຍ

ຄວາມພະຍາຍາມໃນການຕໍ່ສູ້ກັບການຄ້າມະນຸດແຕ່ດັ້ງເດີມມາແມ່ນສຸມໃສ່ການໄລ່ຕາມ ການກະທໍາຜິດຖານຄ້າມະນຸດ, ແລະບໍ່ໄດ້ເລັງໃສ່ລາຍໄດ້ທີ່ໄດ້ມາແລະລົງທຶນໃນອາຊະຍາກໍາ.[7] ການເພີ່ມຄວາມເຂັ້ມແຂງຈຸດສຸມຂອງເຮົາໂດຍເລັງໃສ່ແງ່ມຸມຂອງການເງິນຂອງຜູ້ກະທໍາຜິດ ໄດ້ອໍານວຍໂອກາດທີ່ຫຼາກຫຼາຍ, ແຕ່ໃນຂະນະດຽວກັນກໍມີສິ່ງທ້າທາຍເຊັ່ນດຽວກັນ. ປະເດັນຫຼັກຢ່າງໜຶ່ງກໍຄື ຕ້ອງໄດ້ເສີມຂະຫຍາຍຄວາມເຂົ້າໃຈຂອງພວກເຮົາວ່າແມ່ນຫຍັງທີ່ເປັນສ່ວນປະກອບໃຫ້ເກີດຄວາມສໍາເລັດໃນກໍລະນີຂອງການຄ້າມະນຸດ, ຕ້ອງຮັບຮອງວ່າ ການຍຶດຊັບສິນແລະການນໍາເອົາເງິນຈາກການຟອກເງິນມາໃຊ້ເປັນວິທີການດໍາເນີນຄະດີອີກແບບໜຶ່ງນັ້ນ ສາມາດປະກອບສ່ວນໃນການຕໍ່ສູ້ກັບອາຊະຍາກໍາແບບນີ້ໄດ້.

### ຂໍ້ແນະນໍາ

ໃຫ້ເກັບກໍາສະຖິຕິໃນເລື່ອງຊັບສິນທີ່ຍຶດມາໄດ້ແລະການນໍາໃຊ້ເງິນຂອງການກະທໍາຜິດຖານຟອກເງິນ ເພື່ອທໍາລາຍເຄືອຂ່າຍການຄ້າມະນຸດ. ໃຫ້ພິຈາລະນາລວມເອົາສິ່ງເຫຼົ່ານີ້ເຂົ້າໃນການປະເມີນປະສິດທິພາບຂອງຜົນງານການເຮັດວຽກສໍາລັບການຕອບຮັບຕໍ່ກໍລະນີຄ້າມະນຸດໃນປະເທດຂອງທ່ານ.

### ຂໍ້ແນະນໍາ

ໃຫ້ສະໜອງ ການສະໜັບສະໜູນລະດັບ-ສູງ ຕໍ່ການນໍາໃຊ້ ວິທີ ການ 'ຕິດຕາມເງິນ' ໃນການສືບສວນສອບສວນການຄ້າມະນຸດ ເພື່ອສ້າງແຮງບັນດານໃຈໃຫ້ມີການປະຕິບັດທົ່ວທຸກລະດັບໃນອົງການຈັດຕັ້ງຂອງທ່ານ. ຍົກຕົວຢ່າງ, ເຈົ້າໜ້າທີ່ທາງການລະດັບອາວຸໂສອາດຈະອອກຖະແຫຼງການຕໍ່ມວນຊົນໃນການສະໜັບສະໜູນວິທີການນີ້.

ອີກປະເດັນໜຶ່ງກໍມີຢູ່ວ່າບັນດາຊຸມຊົນທີ່ເຮັດວຽກຕ້ານ-ການຄ້າມະນຸດແລະຕ້ານ-ການຟອກເງິນສ່ວນໃຫຍ່ຈະເຮັດວຽກແບບແຍກປ່ຽວ. ບັນດາອົງກອນຮັກສາກົດໝາຍສ່ວນໃຫຍ່ກໍຈະບໍ່ຮູ້ຫຼືບໍ່ໄດ້ຖືກຝຶກອົບຮົມໃນການຈັດການກັບກິດຈະກໍາດ້ານການເງິນທີ່ກ່ຽວພັນກັບການຄ້າມະນຸດ, ແລະເຈົ້າໜ້າທີ່ສືບສວນສອບສວນອາດຈະຍັງຂາດຄວາມຮູ້ລະອຽດກ່ຽວກັບຮູບແບບຕ່າງໆຂອງທຸລະກິດການຄ້າມະນຸດ, ຕະຫຼາດທີ່ມີຢູ່, ແລະ ວິທີທີ່ມັກໃຊ້ໃນການຍົກຍ້າຍທຶນທີ່ຜິດກົດໝາຍ. ໂດຍການນໍາເອົາມຸມມອງເຫຼົ່ານີ້ມາປະກອບເຂົ້າກັນຈະໜູນໃຫ້ເກີດທ່າອຽງອັນແຮງກ້າໃນການເຮັດໃຫ້ຄວາມພະຍາຍາມຂອງພວກເຮົາໃນການຕໍ່ສູ້ກັບການຄ້າມະນຸດກ້າວໄປຂ້າງໜ້າ, ແຕ່ວ່າ ຕ້ອງຖືເປັນພັນທະຢ່າງແຮງກ້າຈາກປະເທດຕ່າງໆເພື່ອທັບມ້າງຄວາມແຕກແຍກແລະແຂ່ງຂັນກັນລະຫວ່າງອົງການຈັດຕັ້ງຕ່າງໆ. ການປູກຈິດສໍານຶກແລະກິດຈະກໍາເສີມສ້າງ-ຄວາມອາດສາມາດແມ່ນຈໍາເປັນຕ້ອງມີເພື່ອຊ່ວຍໃຫ້ປະເທດແລະບັນດາອົງກອນຕ່າງໆຂອງຕົນໄດ້ນໍາໃຊ້ວິທີການດັ່ງກ່າວ.

### ຂໍ້ແນະນໍາ

ໃຫ້ກໍ່ຕັ້ງຍຸດທະສາດໃນການດໍາເນີນວຽກງານທີ່ນໍາເອົາຄວາມຊ່ຽວຊານຈາກອົງກອນຕ່າງທີ່ກ່ຽວຂ້ອງມາປະສົມປະສານກັນ (ລວມທັງຕໍາຫຼວດ, ໄອຍະການ, ແລະ FIUs) ເພື່ອຮັບປະກັນວ່າການກະທໍາຜິດຖານຄ້າມະນຸດໄດ້ຖືກສືບສວນສອບສວນຢ່າງສົມບູນຄົບຖ້ວນ.

5 ແຮງງານທີ່ຖືກບັງຄັບໂດຍລັດຖະບານບໍ່ຖືກລວມຢູ່ໃນນີ້
6 *ຜົນກໍາໄລແລະຄວາມທຸກຍາກ: ເສດຖະກິດຂອງແຮງງານບັງຄັບ,ໜ້າ.12–13*
7 ເສີມສ້າງພະລັງໃຫ້ລະບອບຕ້ານ-ການຟອກເງິນເພື່ອຕໍ່ສູ້ກັບການຄ້າມະນຸດ (2014), ຫ້ອງການຄວາມໝັ້ນຄົງແລະການຮ່ວມມືໃນຢູໂຣບ(OSCE) https://www.osce.org/secretariat/121125?download=true

ການປັບປຸງການໃຊ້ວິທີ ຕ້ານ-ການຟອກເງິນເພື່ອຕໍ່ສູ້ກັບການຄ້າມະນຸດຈະຕ້ອງມີການຮ່ວມໄມ້ຮ່ວມມືຢ່າງໃກ້ຊິດລະຫວ່າງປະເທດຕ່າງໆ, ເພື່ອອໍານວຍຄວາມສະດວກໃນການແລກປ່ຽນຂໍ້ມູນດ້ານການເງິນຂອງກໍລະນີທີ່ກ່ຽວຂ້ອງຢ່າງວ່ອງໄວ. ການສືບສວນສອບສວນການຄ້າມະນຸດອາດຈະໄດ້ຮັບຜົນປະໂຫຍດຈາກການໃຊ້ເຄືອຂ່າຍສໍາລັບການຮ່ວມໄມ້ຮ່ວມມືສາກົນໃນປະເດັນການຟອກເງິນ, ເຊັ່ນການແລກປ່ຽນຂໍ້ມູນລະຫວ່າງ FIUs. ນອກນີ້ ບັນດາປະເທດຍັງຕ້ອງເຮັດວຽກເປັນຄູ່ຮ່ວມງານກັບພາກສ່ວນເອກະຊົນອີກດ້ວຍ, ໃນຖານະເປັນຜູ້ມີສ່ວນຮ່ວມທີ່ສໍາຄັນໃນການຍົກຍ້າຍຜົນກໍາໄລທີ່ກ່ຽວພັນກັບການຄ້າມະນຸດຈາກສະຖານທີ່ໜຶ່ງໄປອີກທີ່ໜຶ່ງ.

## 1.5 ກໍລະນີສຶກສາ

ໃນວັນທີ 1 ເດືອນພຶດສະພາ 2015, ຄະນະທີມງານຮ່ວມ ກອງທັບ-ຕໍາຫຼວດ ສະເພາະກິດ ໄດ້ພົບວ່າມີຢ່າງນ້ອຍ 30 ສົບທີ່ແຄ້ມຮ້າງແຫ່ງໜຶ່ງໃນເຂດອໍາເພີສະດາວໃນຈັງຫວັດສົງຂລາ, ໃກ້ກັບຊາຍແດນ ໄທ-ມາເລເຊຍ. ເພື່ອສະໜັບສະໜູນການສືບສວນສອບສວນຂອງເຈົ້າໜ້າທີ່ຕໍາຫຼວດໃນພຶດຕິກໍາເຄືອຂ່າຍການຄ້າມະນຸດແລະການລັກລອບເອົາຄົນເຂົ້າ-ອອກປະເທດ ທີ່ໜ້າສົງໄສ, ສໍານັກງານຕໍາຫຼວດແຫ່ງຊາດໄທ ໄດ້ພົວພັນຫາໜ່ວຍສືບເລື່ອງການເງິນຂອງປະເທດໄທ, ຫ້ອງການຕ້ານການຟອກເງິນ (AMLO) ຂອງໄທ ເພື່ອສືບສວນສອບສວນກິດຈະກໍາການເງິນທີ່ກ່ຽວພັນກັບກໍລະນີນີ້.

ໂດຍການນໍາໃຊ້ຄັງຂໍ້ມູນຂອງ AMLO’s ທີ່ບັນທຶກການເຄື່ອນໄຫວເລື່ອງເງິນ, ເຈົ້າໜ້າທີ່ຈາກ AMLO ໄດ້ຄົ້ນຫາບັນທຶກການໂອນເງິນທາງອີເລັກໂຕຣນິກ (ທັງພາຍໃນປະເທດແລະສາກົນ), ບັນທຶກການພົກເງິນຕິດໂຕອອກຈາກປະເທດ, ບັນທຶກຄວາມເຄື່ອນໄຫວການເງິນທີ່ໜ້າສົງໄສ, ບັນທຶກການເຄື່ອນຫວເງິນສົດ, ແລະ ບັນທຶກການຊື້ຂາຍອະສັງຫາລິມະຊັບ.

ນອກເໜືອໄປຈາກການຄົ້ນຫາໃນຄັງຂໍ້ມູນຂອງເຂົາເຈົ້າແລ້ວ, AMLO ຍັງຂໍເອົາຂໍ້ມູນຢ່າງກວ້າງຂວາງໄດ້ຈາກພາກສ່ວນອື່ນໆທີ່ລາຍງານຕໍ່ AMLO ໄດ້ອີກດ້ວຍ, ເຊິ່ງລວມມີ:

- ລາຍລະອຽດຂອງເຈົ້າຂອງບັນຊີແລະລາຍລະອຽດການເຄື່ອນໄຫວຂອງລູກຄ້າ (ລວມທັງລາຍງານການຝາກ-ຖອນເງິນຈາກ ບັນຊີ), ຈາກສະຖາບັນການເງິນຕ່າງໆໄດ້ອີກດ້ວຍ
- ບັນທຶກຂອງການເປັນເຈົ້າຂອງທີ່ດິນ, ຊື້, ແລະຂາຍທີ່ກ່ຽວພັນກັບຜູ້ຕ້ອງສົງໄສ, ຈາກຫ້ອງການທະບຽນຕາດິນຂອງໄທ
- ບັນທຶກກ່ຽວກັບຖານະຜູ້ເສຍພາສີຂອງຜູ້ຕ້ອງສົງໄສໃນກໍລະນີ, ລວມທັງບັນທຶກຈາກການແຈ້ງລາຍໄດ້, ບັນທຶກການເສຍພາສີສ່ວນຕົວແລະທຸລະກິດ, ແລະການຈັດການເລື່ອງທະນາຄານ ຂອງເຂົາເຈົ້າ, ຈາກ ສໍານັກງານສັບພາກອນຂອງໄທ, ແລະ
- ລາຍລະອຽດຂອງບັນດາບໍລິສັດແລະບຸກຄົນທີ່ເຊື່ອມໂຍງກັບ ທຸລະກິດ, ລວມທັງທີ່ຢູ່, ຫຸ້ນສ່ວນ, ແລະປະຫວັດການເງິນ, ຈາກ ກົມພັດທະນາທຸລະກິດການຄ້າ.

ໂດຍການກວດເບິ່ງຂໍ້ມູນການເຄື່ອນໄຫວໃນບັນຊີທະນາຄານແລະການໂອນເງິນທາງອີເລັກໂທນິກ, AMLO ສາມາດນໍາຮອຍຄວາມເຄື່ອນໄຫວດ້ານການເງິນຈາກຜູ້ຕ້ອງສົງໄສທີ່ຖືກຈັບກຸມໃນກໍລະນີທີ່ຈະເຊື່ອມໂຍງໄປເຖິງຜູ້ຕ້ອງສົງໄສຕົວສໍາຄັນອື່ນໆໄດ້ຕື່ມ.  ອັນນີ້ ສະແດງໃຫ້ເຫັນເງິນທີ່ຖືກໂອນໄປຈາກຜູ້ຕ້ອງສົງໄສທີ່ຖືກຈັບກຸມ ໄປຫາຜູ້ຕ້ອງສົງໄສຄົນອື່ນໆໂດຍຜ່ານການໂອນທາງບັນຊີໂດຍຕົງພາຍໃນປະເທດໄທ. ຫຼັງຈາກນັ້ນ AMLO ກໍສາມາດສະແດງໃຫ້ເຫັນໄດ້ອີກວ່າວິທີການຈ່າຍເງິນແບບອື່ນໆ, ລວມທັງແບບສົ່ງເງິນສົດຜ່ານບໍລິສັດສົ່ງເຄື່ອງແລະຜ່ານຜູ້ສົ່ງຕໍ່ທີ່ຜິດກົດໝາຍ, ໄດ້ຖືກນໍາມາໃຊ້ເພື່ອໂອນເງິນລະຫວ່າງປະເທດໄທແລະມາເລເຊຍ. AMLO ສາມາດທີ່ຈະນໍາເອົາຂໍ້ມູນໃນການເຄື່ອນໄຫວເຫຼົ່ານີ້ມາປະສົມປະສານກັນໂດຍເກັບກໍາເອົາຂໍ້ມູນການເງິນແລະຈາກສາຍສືບຂອງ ສໍານັກງານຕໍາຫຼວດແຫ່ງຊາດ  ແລະເຮັດການວິເຄາະຢ່າງລະອຽດໄດ້ຈາກຂໍ້ມູນການໂອນເງິນ.

ຢູ່ໃນກຸ່ມຜູ້ຕ້ອງສົງໄສທີ່ຖືກລະບຸຕົວ ໂດຍການສືບສວນສອບສວນດ້ານການເງິນແລະຈາກສາຍສືບ ແມ່ນມີບາງເຈົ້າໜ້າທີ່ຊັ້ນຜູ້ໃຫຍ່, ຕົວການຈັດການເຄືອຂ່າຍອາຊະຍາກໍາທີ່ຖືກສົງໄສ, ອະດີດຫົວໜ້າອົງການບໍລິຫານສ່ວນຈັງຫວັດ, ນາຍົກເທດສະມົນຕີ, ແລະນັກທຸລະກິດຄົນສໍາຄັນຄົນໜຶ່ງ. ໄດ້ມີການຕັ້ງຂໍ້ຫາຕໍ່ບັນດາຜູ້ຕ້ອງສົງໄສດັ່ງກ່າວໃນກໍລະນີຄ້າມະນຸດແລະຟອກເງິນ. ນອກນີ້ AMLO ຍັງຍື່ນຂໍຄໍາສັ່ງສານເພື່ອຍຶດເອົາຜົນກໍາໄລຜິດກົດໝາຍທີ່ກ່ຽວຂ້ອງກັບການກະທໍາຜິດກະທົງຕ່າງໆດັ່ງກ່າວ.

ກໍລະນີນີ້ສະແດງໃຫ້ເຫັນເຖິງວິທີການສືບສວນສອບສວນດ້ານການເງິນທີ່ສາມາດເປີດໂປງເຄືອຂ່າຍຂອງຜູ້ກະທໍາຜິດ ແລະຫຼັກຖານ ເຊິ່ງໄດ້ເຮັດໃຫ້ຮູ້ກວ້າງອອກໄປ, ແລະການເຊື່ອມໂຍງລະຫວ່າງຄົນກຸ່ມນີ້, ເຊິ່ງຖ້າບໍ່ເຮັດດັ່ງນີ້ຜູ້ສືບສວນສອບສວນກໍຈະບໍ່ມີໂອກາດໄດ້ຫຼາຍເຖິງພຽງນີ້.

# ໝວດທີ 2: ກອບວຽກດ້ານກົດໝາຍ

## 2.1 ມາດຕະຖານສາກົນ

ຄະນະກຳມະການສະເພາະກິດເພື່ອດຳເນີນມາດຕະການທາງດ້ານການເງິນ ຕ້ານການຟອກເງິນ (FATF) ແມ່ນອົງການລະຫວ່າງ-ລັດຖະບານທີ່ມີ ສະມາຊິກ 37 ປະເທດ ທີ່ມີຄວາມຮັບຜິດຊອບໃນການວາງມາດຕະຖານສາກົນໃນເລື່ອງການຟອກເງິນ, ແລະປະເມີນເບິ່ງວ່າປະເທດຕ່າງໆຈັດຕັ້ງປະຕິບັດມາດຕະຖານສາກົນນີ້ໄດ້ດີປານໃດ.[8] ນອກນີ້ ກໍຍັງມີສົນທິສັນຍາຂອງ UN ຫຼາຍສະບັບເຊິ່ງລວມເຖິງພັນທະຂອງປະເທດກ່ຽວກັບການຟອກເງິນແລະຊັບສິນຈາກອາຊະຍາກຳ.[9] ພັນທະຫຼັກຂອງປະເທດທີ່ໄດ້ລະບຸໄວ້ໃນມາດຕະຖານເຫຼົ່ານີ້ລວມເຖິງຄວາມຈຳເປັນໃນການອອກກົດທີ່ຄວບຄຸມເລື່ອງກະທຳຜິດກົດໝາຍຖານຟອກເງິນໄດ້ຢ່າງສົມບູນຮອບດ້ານ, ແລະຕ້ອງກໍ່ຕັ້ງລະບອບທີ່ມີປະສິດທິຜົນໂດຍໃຫ້ມີການໂຈະ, ການຈັບກຸມ ແລະ ຍຶດລາຍໄດ້ ຈາກອາດຊະຍາກຳ.

## 2.2 ກົດທີ່ຄວບຄຸມການກະທຳຜິດຖານຟອກເງິນໄດ້ຢ່າງສົມບູນຮອບດ້ານ

ເພື່ອປະຕິບັດຕາມມາດຕະຖານສາກົນ, ກົດໝາຍທີ່ຄວບຄຸມເລື່ອງຟອກເງິນໄດ້ຢ່າງສົມບູນຮອບດ້ານຕ້ອງ:

- ເຮັດໃຫ້ທຸກໆຂັ້ນຕອນຂອງຂະບວນການຟອກເງິນເປັນການກະທຳຜິດທາງອາຍາ
- ນຳກົດນີ້ມາໃຊ້ກັບການກະທຳຜິດແອບແຝງທີ່ສະຫຼຸບໄດ້ທຸກຮູບແບບຢ່າງກວ້າງຂວາງ,[10] ລວມທັງການຄ້າມະນຸດ
- ສະໜອງຄວາມອາດສາມາດໃນການສືບສວນສອບສວນການຟອກເງິນໂດຍເຮັດໃຫ້ເປັນການກະທຳຜິດທັງສອງແບບຄືເປັນທັງແບບດ່ຽວ, ແລະເພີ່ມສ່ວນກະທຳຜິດທີ່ແອບແຝງໄປພ້ອມ
- ຮັບປະກັນວ່າ ບໍ່ຈຳເປັນຕ້ອງລົງອາຍາການກະທຳຜິດທີ່ແອບແຝງກ່ອນເມື່ອພິສູດວ່າຊັບສິນນັ້ນແມ່ນລາຍໄດ້ຈາກອາຊະຍາກຳ
- ນຳໃຊ້ກົດເລື່ອງໃຫ້ມີຄວາມຮັບຜິດຊອບທາງອາຍາຕໍ່ນິຕິບຸກຄົນ (ຕົວຢ່າງ, ບໍລິສັດຕ່າງໆ)
- ນຳໃຊ້ກົດຕໍ່ຊັບສິນທຸກຮູບແບບ, ບໍ່ວ່າຈະມີມູນຄ່ານ້ອຍຫຼາຍປານໃດກໍຕາມ, ທີ່ສະແດງວ່າເປັນລາຍໄດ້ຈາກອາຊະຍາກຳບໍ່ວ່າຈະແມ່ນໂດຍຕົງກໍຄືທາງອ້ອມ,
- ເສີມຂະຫຍາຍການໃຊ້ກົດຕໍ່ການກະທຳຜິດທີ່ເກີດຂຶ້ນໃນອີກປະເທດໜຶ່ງ, ຖ້າວ່າຄວາມປະພຶດນັ້ນແມ່ນການກະທຳຜິດໃນປະເທດອື່ນແລະຖືວ່າເປັນຄວາມຜິດແອບແຝງໃນປະເທດຕົນເອງ, ແລະ
- ຮັບປະກັນວ່າ ຄວາມຕັ້ງໃຈແລະຄວາມຮູ້ທີ່ຕ້ອງມີເພື່ອພິສູດການກະທຳຜິດຖານຟອກເງິນນັ້ນໄດ້ເປັນທີ່ເຂົ້າອົກເຂົ້າໃຈໂດຍອີງໃສ່ ຂໍ້ເທັດຈິງທີ່ປະກອບດ້ວຍວັດຖຸປະສົງ.

### ຂໍ້ແນະນຳ

ເພື່ອສະແດງໃຫ້ເຫັນວ່າເປັນການຟອກເງິນ, ອົງປະກອບສຳຄັນທີ່ຕ້ອງກຳນົດກໍຄືບຸກຄົນຜູ້ທີ່ໄດ້ກ່ຽວຂ້ອງກັບເງິນນັ້ນ **ໄດ້ຮູ້** ຫຼື **ຄວນຈະສົງໄສ** ວ່າເງິນນັ້ນໄດ້ມາຈາກອາຊະຍາກຳ, ຫຼືມີຄວາມຕັ້ງໃຈທີ່ຈະຖືກນຳໄປໃຊ້ໃນການເຮັດອາຊະຍາກຳ.

---

8 ໃຫ້ເບິ່ງເອກະສານຂໍ້ສະເໜີຂອງ FATF 2012 ແລະ ເອກະສານວິທີປະເມີນ ການປະຕິບັດຕາມລະບຽບທາງເຕັກນິກ ຂອງ FATF 2013 ຕໍ່ຂໍ້ສະເໜີຂອງ FATF ແລະ ຄວາມມີປະສິດທິພາບຂອງລະບົບ AML/CFT.

9 ອັນນີ້ລວມມີ: ສົນທິສັນຍາ *UN ວ່າດ້ວຍການຕໍ່ຕ້ານການຂົນສົ່ງທີ່ຜິດກົດໝາຍໃນຢາເສບຕິດແລະວັດຖຸທີ່ມີຜົນກະທົບຕໍ່ຈິດແລະປະສາດ 1988* (ສົນທິສັນຍາວຽນນາ), ສົນທິສັນຍາ *UN ວ່າດ້ວຍການຕໍ່ຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ 2000* (UNTOC ຫຼື ສົນທິສັນຍາ ພາເລີໂມ), ແລະ *UN ສົນທິສັນຍາວ່າດ້ວຍການຕໍ່ຕ້ານການສໍ້ລາດບັງຫຼວງ 2003* (UNCAC).

10 10 ອາຊະຍາກຳແອບແຝງທີ່ສະຫຼຸບໄດ້ແມ່ນການກະທຳທີ່ສະໜອງຊັບພະຍາກອນແບບຊຸກເຊື່ອງໃຫ້ແກ່ການເຮັດອາຊະຍາກຳຢ່າງອື່ນ. ຕົວຢ່າງ ການຄ້າມະນຸດ ແລະການລັກລອບເອົາຄົນເຂົ້າ-ອອກປະເທດ ທີ່ ສະໜອງທຶນໃຫ້ແກ່ການຟອກເງິນຫຼືໃຫ້ຄວາມຊ່ວຍເຫຼືອດ້ານການເງິນແກ່ພຶດຕິກຳກໍ່ການຮ້າຍ.

## ຂໍ້ແນະນຳ

ຮັບປະກັນວ່າການຟອກເງິນແລະການກະທຳຜິດແອບແຝງສາມາດນຳເອົາມາດຳເນີນຄະດີທີ່ແຍກກັນ. ໃນກໍລະນີທີ່ບໍ່ສາມາດລົງອາຍາການກະທຳຜິດແອບແຝງໄດ້ (ເຊັ່ນການຄ້າມະນຸດ), ແຕ່ວ່າເມື່ອມີຫຼັກຖານວ່າມີການຟອກເງິນ, ອັນນີ້ ຈະເຮັດໃຫ້ເຈົ້າໜ້າທີ່ຮັກສາກົດໝາຍສາມາດແນໃສ່ການກະທຳຜິດຖານຟອກເງິນເຊິ່ງແຍກຈາກການກະທຳຜິດແອບແຝງ.

## 2.3 ກອບວຽກສຳລັບການຍຶດຊັບທີ່ມີປະສິດທິຜົນ

ການຍຶດຊັບຫຼືການຮິບຊັບໝາຍເຖິງການສືບສວນສອບສວນ, ການຍັບຍັ້ງຊົ່ວຄາວ, ການຍຶດແລະຈັດການກັບລາຍໄດ້ທີ່ໄດ້ມາຈາກອາຊະຍາກຳ. ການຍຶດອາດເຮັດໄດ້ໂດຍອີງໃສ່ການຖືກລົງ-ອາຍາ (ຜູ້ກະທຳຜິດຕ້ອງໄດ້ຖືກລົງອາຍາຍ້ອນການກະທຳຜິດຈາກການດຳເນີນຄະດີອາຍາ ກ່ອນຈະຍຶດຊັບໄດ້) ຫຼືແບບບໍ່ຕ້ອງ-ລົງອາຍາ. ລະບົບການຍຶດຊັບສິນທີ່ເປັນຜົນຮອບດ້ານຈະເຮັດໃຫ້ທ່ານສາມາດສືບສວນສອບສວນ, ກັກກັນ, ຈັບກຸມ ແລະ ຍັບຍັ້ງ ລາຍໄດ້ຂອງອາຊະຍາກຳ. ນອກນີ້ ຍັງຈະລວມເອົາມາດຕະການເພື່ອພິຈາລະນາເອົາຄືນ-ທີສາມ (ຫຼືຜູ້ທີ່ເຂົ້າມາຫຍຸ້ງກ່ຽວແບບບໍ່ຮູ້ຕົວ) ທີ່ໄດ້ຮັບຜົນປະໂຫຍດຈາກຊັບສິນ, ແລະມາດຕະການທີ່ອະນຸມັດໃຫ້ຮິບຊັບສິນໄປໃຫ້ລັດຖະບານ.  ຫຼາຍປະເທດທີ່ໄດ້ຈັດຕັ້ງປະຕິບັດກອບວຽກດ້ານກົດໝາຍທີ່ບໍ່ຕ້ອງ-ລົງອາຍາ ໄດ້ຮັບຄວາມສຳເລັດຢ່າງໃຫຍ່ຫຼວງໃນການທຳລາຍຄວາມພະຍາຍາມ, ແລະສາມາດເອົາເງິນທີ່ຍຶດໄດ້ນັ້ນໄປຊ່ວຍສະກັດສະກັ້ນອາຊະຍາກຳໃນອະນາຄົດ - ຍົກຕົວຢ່າງ, ໂດຍຜ່ານການປ້ອງກັນບໍ່ໃຫ້ເກີດອາຊະຍາກຳ, ຜ່ານໂຄງການສຶກສາແລະການໃຊ້ອຳນາດບັງຄັບ.

## ຂໍ້ແນະນຳ: ສ້າງລະບົບຍຶດຊັບທີ່ບໍ່ຕ້ອງ-ລົງ ອາຍາ

ການຍຶດຊັບໂດຍອີງໃສ່ ແບບບໍ່ຕ້ອງມີ-ການລົງອາຍາກ່ອນ ສາມາດຊ່ວຍໃຫ້ມີປະສິດທິພາບຕໍ່ລະບົບຄວບຄຸມລາຍໄດ້ຈາກອາຊະຍາກຳ. ການຮິບຊັບແບບບໍ່ຕ້ອງມີ-ການລົງອາຍາກ່ອນ ເປີດໂອກາດໃຫ້ມີການຍັບຍັ້ງແລະຍຶດຊັບສິນທີ່ຖືກສົງໄສຈາກແຫຼ່ງຕົ້ນຕໍຂອງອາຊະຍາກຳໂດຍບໍ່ຈຳເປັນຕ້ອງໃຫ້ມີການລົງອາຍາກ່ອນ. ການກະທຳດັ່ງນີ້ສາມາດ:

- ເປີດໂອກາດໃຫ້ຊັບສິນຖືກໂຈະຫຼືຍັບຍັ້ງແຕ່ຕົ້ນໆຂອງຂະບວນການສືບສວນສອບສວນ, ເຊິ່ງຈະຊ່ວຍສະກັດກັ້ນບໍ່ໃຫ້ຊັບສິນນັ້ນຖືກກຳຈັດຖິ້ມໃນລະຫວ່າງທີ່ຍັງຢູ່ໃນລະຫວ່າງສືບສວນສອບສວນຫຼືດຳເນີນຄະດີ
- ສະໜອງໃຫ້ເປັນຜົນດີ ໃນກໍລະນີທີ່ຜູ້ກະທຳຜິດໄດ້ເສຍຊີວິດໄປແລ້ວ, ບໍ່ສາມາດຄົ້ນພົບ, ຫຼື ບໍ່ສາມາດລະບຸໂຕໄດ້
- ເຮັດໃຫ້ສາມາດຍຶດຊັບສິນຫຼືລາຍໄດ້ທີ່ມາຈາກອາຊະຍາກຳຈາກພວກທີ່ໄດ້ຮັບຜົນກຳໄລຈາກອາຊະຍາກຳນັ້ນ, ແຕ່ວ່າໄດ້ທຳຕົນຫ່າງອອກຈາກເຫດການ, ໂດຍການຍຶດຊັບນັ້ນບໍ່ຈຳເປັນຕ້ອງມີການລົງອາຍາ, ແລະ
- ເຮັດໃຫ້ສາມາດຍຶດເອົາສິ່ງຂອງທີ່ຖືໄວ້ໂດຍຄົນທີສາມ ແລະຂອງເຫຼົ່ານັ້ນແມ່ນສິ່ງແປດເປື້ອນ (ສິ່ງທີ່ຖືກໃຊ້, ຫຼືມີຈຸດປະສົງຈະນຳໄປໃຊ້, ໂດຍບຸກຄົນທີ່ກະທຳຜິດ, ຫຼືມີການກ່ຽວຂ້ອງກັບ ການກະທຳຄວາມຜິດທາງອາຍາ) ຫຼືຢູ່ພາຍໃຕ້ການຄວບຄຸມທີ່ເປັນຜົນຂອງຜູ້ກະທຳຜິດ.

## 2.4 ມີຊັບສິນຫຍັງທີ່ສາມາດຖືກກັກຫຼືຍຶດໄດ້?

ຊັບສິນທີ່ໃຊ້ປະກອບເພື່ອເຮັດອາຊະຍາກຳ (ເຄື່ອງໄມ້ເຄື່ອງມື) ແລະຊັບສິນທີ່ໄດ້ມາຈາກອາຊະຍາກຳ (ລາຍໄດ້ຈາກອາຊະຍາກຳ) ຫຼືມູນຄ່າທີ່ໄດ້ມາ ອາດຈະຖືກກັກຫຼືຍຶດ. ນອກນີ້ ກໍຍັງເປັນໄປໄດ້ທີ່ຈະກັກຊັບສິນຂອງອາຊະຍາກອນທີ່ເອົາໄປໃສ່ຊື່ຜູ້ອື່ນແຕ່ສາມາດໄປຄວບຄຸມໄດ້. ສຳລັບພວກອາຊະຍາກອນຫຼາຍໆຄົນແລ້ວ, ການປົກປ້ອງຜົນກຳໄລຈາກອາຊະຍາກຳແມ່ນຈຸດປະສົງຫຼັກແລະວິທີການທີ່ພວກອາຊະຍາກອນໃຊ້ເພື່ອປົກປິດແຫຼ່ງແລະການເປັນເຈົ້າຂອງຊັບສິນຂອງເຂົາເຈົ້າໄດ້ກາຍມາເປັນສິ່ງທ້າທາຍທີ່ຊັບຊ້ອນສຳລັບຜູ້ສືບສວນສອບສວນ. ກົດໝາຍໃນປະເທດຄວນມີຄວາມຍືດຍຸ່ນພໍເພື່ອໃຫ້ທັນກັບບັນຫາທ້າທາຍເມື່ອຊັບສິນນັ້ນແມ່ນຄົນຕ່າງຊາດເປັນເຈົ້າຂອງ ແລະ ຕ້ອງສາມາດແກ້ປົມໂຄງສ້າງຂອງການເປັນເຈົ້າຂອງເພື່ອໃຫ້ປະຈັກວ່າຜູ້ເປັນເຈົ້າຂອງອັນແທ້ຈິງແມ່ນໃຜ.

**ລາຍໄດ້ຈາກອາຊະຍາກຳ** ອາດລວມເອົາຜົນໄດ້ທາງເສດຖະກິດຈາກຊັບສິນຫຼືຊັບສິນທີ່ແປຮູບຫຼືປ່ຽນຮູບ, ທັງໝົດຫຼືເປັນບາງສ່ວນ, ໃຫ້ເປັນຊັບສິນອັນໃໝ່. ຍົກຕົວຢ່າງ, ລົດ, ເຮືອນ ຫຼື ເຮືອທີ່ຊື້ມາໂດຍໃຊ້ທຶນຈາກລາຍໄດ້ຂອງການຄ້າມະນຸດອາດຖືກຍຶດໄດ້ຍ້ອນວ່າມັນຖືກຊື້ມາໂດຍໃຊ້ເງິນທີ່ໄດ້ມາຈາກອາຊະຍາກຳ.

**ເຄື່ອງໄມ້ເຄື່ອງມື** ຢ່າງໃດໜຶ່ງ (ຫຼືເຄື່ອງມື) ຂອງອາຊະຍາກຳແມ່ນ ຊັບສິນທີ່ນຳມາໃຊ້ເພື່ອອຳນວຍຄວາມສະດວກໃນການເຮັດອາຊະຍາກຳແລະອາດລວມເອົາ, ຕົວຢ່າງ, ລົດຫຼືເຮືອທີ່ໃຊ້ໃນການລຳລຽງຄົນ, ຫຼືເງິນທີ່ໃຊ້ເພື່ອເປັນທຸນໃນການກໍ່ອາຊະຍາກຳ. ອາດບໍ່ມີຫຼັກຖານມາຢັ້ງຢືນໄດ້ວ່າລົດຄັນນັ້ນແມ່ນໄດ້ມາຍ້ອນການກະທຳຜິດທາງອາຍາຫຼືວ່າໄດ້ມາຍ້ອນທຶນທີ່ໄດ້ມາຈາກການກະທຳຜິດທາງອາຍາແຕ່ຕົ້ນໆ. ຢ່າງໃດກໍດີ, ມັນໄດ້ຖືກນຳມາໃຊ້ໃນການເຮັດອາຊະຍາກຳ, ສະນັ້ນ ມັນຈຶ່ງສາມາດຖືກຍຶດໄດ້ຍ້ອນມັນແມ່ນເຄື່ອງໄມ້ເຄື່ອງທີ່ໃຊ້ໃນອາຊະຍາກຳ.

**ການຄວບຄຸມຊັບສິນທີ່ມີປະສິດທິຜົນ** ໝາຍເຖິງຊັບສິນທີ່ຖືກຄວບຄຸມໂດຍຄົນຜູ້ໜຶ່ງບໍ່ວ່າຄົນຜູ້ນັ້ນຈະໄດ້ຮັບຜົນປະໂຫຍດຢ່າງສົມບູນຕາມກົດໝາຍ ຫຼື ໄດ້ຮັບຜົນປະໂຫຍດເທົ່າທຽມກັນ ໃນຊັບສິນ ຫຼື ມີສິດຫຼືອຳນາດທີ່ກ່ຽວຂ້ອງກັບຊັບສິນນັ້ນ. ເມື່ອຕັດສິນວ່າຄົນຜູ້ໜຶ່ງມີສິດຄວບຄຸມທີ່ເປັນຜົນຕໍ່ຊັບສິນຫຼືບໍ່, ມີປັດໄຈຫຼາຍຢ່າງທີ່ຖືກນຳມາພິຈາລະນາເຊິ່ງລວມມີ:

- ການຖືຫຸ້ນ, ການມີຫຸ້ນກູ້ ຫຼື ການເປັນກຳມະການບໍລິຫານ ໃນບໍລິສັດໃດໜຶ່ງ ເຊິ່ງສ້າງ ຜົນປະໂຫຍດ (ບໍ່ວ່າຈະໂດຍຕົງຫຼືທາງອ້ອມ) ໃນຊັບສິນ ນັ້ນ.
- ການມອບສັນທະທີ່ມີຄວາມກ່ຽວພັນກັບຊັບສິນ
- ຄວາມສຳພັນທາງຄອບຄົວ, ແລະ ທາງທຸລະກິດ ລະຫວ່າງບຸກຄົນທີ່ຢູ່ພາຍໃນປະເທດ ທີ່ໄດ້ຮັບຜົນປະໂຫຍດໃນຊັບສິນ.

### ຂໍ້ແນະນຳ: ສ້າງລະບົບຍຶດຊັບທີ່ມີປະສິດທິຜົນ

ຜົນຈາກການຍຶດຊັບອາຊະຍາກຳຈະດີຂຶ້ນໂດຍຜ່ານ:

- ສະໜອງຂໍ້ມູນແລະຝຶກອົບຮົມແບບຮອບດ້ານແກ່ທຸກອົງກອນ ບັງຄັບໃຊ້ກົດໝາຍ, ໜ່ວຍຂ່າວກອງທາງການເງິນ, ແລະບັນດາໄອຍະການ.
- ຕັ້ງທີມງານຫຼືໜ່ວຍສືບສວນສືບສວນແລະໄອຍະການ ພິເສດ ທີ່ມີບູລິມະສິດໃນການສຸມໃສ່ການຍຶດຊັບໂດຍຕົງ.
- ສົ່ງເສີມໃຫ້ມີການຮ່ວມໄມ້ຮ່ວມມືກັນຢ່າງໃກ້ຊິດແຕ່ຕົ້ນໆໂດຍໄວທີ່ສຸດເທົ່າທີ່ຈະໄວໄດ້ ລະຫວ່າງບັນດາຜູ້ສືບສວນສອບສວນ ແລະໄອຍະການເພື່ອຂຶ້ນແຜນສຳລັບທຸກແງ່ມຸມຂອງການຍຶດຊັບ.
- ທົບທວນແລະເສີມສ້າງພະລັງແກ່ທຸກອົງປະກອບຂອງກອບວຽກການຍຶດຊັບທາງດ້ານກົດໝາຍຂອງທ່ານ ລວມທັງ;
    - ອຳນາດໃນການສືບສວນສອບສວນເພື່ອໃຫ້ຮູ້ສະຖານທີ່ຂອງຊັບສິນແລະໃຫ້ຮູ້ວ່າໃຜເປັນເຈົ້າຂອງຜົນກຳໄລ
    - ກັກກັນ, ຍັບຍັ້ງ ແລະ ຍຶດຊັບ, ແລະ
    - ໃຫ້ຄວາມຊ່ວຍເຫຼືອເຊິ່ງກັນແລະກັນດ້ານກົດໝາຍ.

# ໝວດທີ 3: ວິທີການຟອກເງິນທີ່ກ່ຽວຂ້ອງກັບການຄ້າມະນຸດ



## 3.1 ການຟອກເງິນແມ່ນເຮັດວິທີໃດ?

ໃນຂະນະທີ່ຂັ້ນຕອນໃນການຟອກເງິນມີຫຼາຍຂັ້ນຕອນ, ຕາມປົກກະຕິຈະແຍກອອກເປັນສາມຂັ້ນ: **ວາງຕົ້ນທຶນ, ເຊື່ອງສິ້ນ ແລະ ໃຊ້ສອຍສະດວກ**, ດັ່ງທີ່ຂຽນໄວ້ຂ້າງລຸ່ມ.




- ວາງຕົ້ນທຶນ ແມ່ນການນຳເອົາທຶນຫຼືຊັບສິນເຂົ້າໄປໃສ່ລະບົບການເງິນ. ຕົວຢ່າງ, ອັນນີ້ສາມາດເຮັດໄດ້ໂດຍການເອົາເງິນສົດຝາກເຂົ້າບັນຊີທະນາຄານຫຼືໃຊ້ເງິນສົດຊື້ຊັບສິນຕ່າງໆ.
- ເຊື່ອງສິ້ນ ແມ່ນການປົກປິດຕົ້ນຕໍທີ່ມາທີ່ຜິດກົດໝາຍຂອງທຶນທີ່ວາງລົງໄວ້ໂດຍການຍົກຍ້າຍຫຼືແອບແຝງເງິນນັ້ນ. ຕົວຢ່າງ, ອັນນີ້ສາມາດເຮັດໄດ້ໂດຍການໃຫ້ພວກວິຊາຊີບເປັນຄົນກາງເຮັດໃຫ້ (ເຊັ່ນທະນາຍຄວາມຫຼືນັກບັນຊີ) ຫຼືໂດຍການກໍ່ຕັ້ງບໍລິສັດຫຼືໃນຮູບແບບມອບສັນທະ ເພື່ອໂອນເງິນໄປໃສ່.
- ໃຊ້ສອຍສະດວກ ຈະເກີດຂຶ້ນຫຼັງຈາກເງິນທຶນນັ້ນໄດ້ຖືກເຊື່ອງສິ້ນແລະຢູ່ໃນບ່ອນຫ່າງຈາກແຫຼ່ງຕົ້ນຕໍຂອງມັນ, ແລະເງິນນັ້ນກໍຈະສາມາດເອົາອອກມາໃຫ້ພວກອາຊະຍາກອນໃຊ້ສອຍແລະຄວບຄຸມໄດ້ຄືກັບວ່າເປັນທຶນທີ່ຖືກຕ້ອງຕາມກົດໝາຍ. ເງິນທີ່ເບິ່ງຄືວ່າເປັນ 'ເງິນສະອາດ' ຈະຖືກນຳເອົາອອກມາໃຊ້ຈ່າຍສຳລັບກິດຈະກຳຕ່າງໆເຊັ່ນເອົາໄປລົງທຶນເຮັດກິດຈະກຳທາງອາຊະຍາກຳອີກໃໝ່ຫຼືລົງທຶນຄ້າຂາຍແບບຖືກກົດໝາຍ (ເຊັ່ນຊື້ຫຸ້ນໃນບໍລິສັດ), ຫຼືນຳເອົາໄປຊື້ຊັບສິນລາຄາແພງ (ເຊັ່ນທີ່ດິນຫຼືເຮືອນ) ແລະ ສິນຄ້າຫຼູຫຼາ (ເຊັ່ນລົດລາຄາແພງ).

## 3.2 ວິທີການທົ່ວໄປໃນການຟອກເງິນ

ວິທີການຕ່າງໆໃນການຟອກເງິນ (ຫຼື 'ປະເພດຕ່າງໆ') ຢູ່ໃນສະຖານທີ່ໃດໜຶ່ງແມ່ນໄດ້ຮັບອິດທິພົນຢ່າງໜັກຈາກ ເສດຖະກິດ, ຕະຫຼາດການເງິນ, ແລະລະບອບຕໍ່ຕ້ານການຟອກເງິນ. ພວກອາຊະຍາກອນຍັງສາມາດຄິດຄົ້ນແນວຄິດສ້າງສັນຫຼາຍຢ່າງໃນການຊອກຫາວິທີເຮັດການຟອກເງິນ.

ວິທີການຟອກເງິນທີ່ປະພຶດກັນທົ່ວໄປໄດ້ຂຽນໄວ້ຢູ່ຂ້າງລຸ່ມນີ້.

**ທະນາຄານຕ່າງປະເທດ**
ເງິນສາມາດຖືກສົ່ງຜ່ານ 'ບັນຊີຕ່າງປະເທດ' ໃນປະເທດທີ່ມີກົດໝາຍທະນາຄານທີ່ລຶກລັບ, ເຊິ່ງອາດກາຍເປັນບໍລິການທະນາຄານທີ່ບໍ່ຕ້ອງແຈ້ງຊື່ຄົນຝາກ.

**ການລັກລອບເອົາເງິນສົດເຂົ້າ-ອອກປະເທດ**
ເງິນສົດສາມາດຖືກພົກຕິດໂຕຜ່ານພົມແດນເພື່ອນຳລາຍໄດ້ທີ່ໄດ້ມາຈາກອາຊະຍາກຳໃຫ້ອອກຫ່າງຈາກບ່ອນກະທຳຜິດທີ່ໄດ້ເງິນນັ້ນມາ.

**ການໂອນແບບອື່ນ/ແບບບໍ່ເປັນທາງການ**
ບາງປະເທດໃນເອເຊຍມີລະບົບທະນາຄານທີ່ຈັດຕັ້ງເປັນຢ່າງດີແລະຖືກຕ້ອງຕາມກົດໝາຍເຊິ່ງອະນຸຍາດໃຫ້ຄົນຝາກ, ຖອນແລະໂອນເງິນໂດຍບໍ່ຕ້ອງມີເອກະສານຮອງຮັບ.

**ບໍລິສັດກາບຫອຍ**
ອັນນີ້ແມ່ນບໍລິສັດທີ່ຕັ້ງຂຶ້ນມາເພື່ອຈຸດປະສົງໃນການຟອກເງິນໂດຍສະເພາະໂດຍການເອົາຜົນກຳໄລທີ່ຜິດກົດໝາຍມາເຮັດເປັນ 'ເງິນຈ່າຍ' ສຳລັບສິນຄ້າຫຼືບໍລິການທີ່ບໍ່ມີຕົວຕົນທີ່ແທ້ຈິງແລະເຮັດໃຫ້ມີການຈັບຈ່າຍໃຊ້ສອຍເໝືອນຈິງໂດຍການເຮັດໃບເກັບເງິນສິນຄ້າແລະບັນຊີເຂົ້າອອກປອມ.

**ແບບເປັນໂຄງຮ່າງຫຼື 'ສະເມີບຟີງ'**
ເງິນຈຳນວນໃຫຍ່ໆໄດ້ຖືກແຕກອອກເປັນຈຳນວນນ້ອຍ, ແລະໜ້າສົງໄສນ້ອຍລົງເພື່ອຫຼີກລ່ຽງການລາຍງານຕາມເກນເງິນຈຳນວນຂັ້ນຕ່ຳສຸດຂອງ FIUs. ຫຼັງຈາກນັ້ນເງິນກໍຈະຖືກເອົາໄປຝາກໃນບັນຊີທະນາຄານໜຶ່ງບັນຊີຫຼືຫຼາຍໆບັນຊີໂດຍຄົນຫຼາຍຄົນ (ສະເມີຟ) ຫຼືໂດຍຄົນຜູ້ດຽວໃນລະຍະເວລາຍາວ.

**ລົງທຶນໃນບໍລິສັດທີ່ຖືກຕ້ອງຕາມກົດໝາຍ**
ຜົນກຳໄລຜິດກົດໝາຍສາມາດຖືກນຳເອົາໄປເຂົ້າໃນທຸລະກິດທີ່ຖືກຕ້ອງຕາມກົດໝາຍ - ໂດຍສະເພາະທຸລະກິດທີ່ໃຊ້ເງິນສົດເປັນພື້ນຖານ, ເຊັ່ນຮ້ານອາຫານຫຼືບາຂາຍເຫຼົ້າ-ເພື່ອປົກປິດແຫຼ່ງທີ່ມາຂອງເງິນ. ທຸລະກິດເຫຼົ່ານີ້ອາດຈະເປັນ 'ບໍລິສັດບັງໜ້າ' ເຊິ່ງຕາມໂຕຈິງກໍຂາຍອາຫານຫຼືບໍລິການແຕ່ຈຸດປະສົງແທ້ຈິງແມ່ນເພື່ອເອົາເງິນມາຟອກໃຫ້ສະອາດ.

**ຊັບສິນລາຄາແພງ**
ສິນຄ້າແລະຊັບສິນລາຄາແພງເຊັ່ນ ງານສິນລະປະ, ເຄື່ອງຂອງເກົ່າ, ເຄື່ອງປະດັບ, ເພັດພອຍ, ເຮືອ ຫຼື ລົດ ແລະ ອະສັງຫາລິມະຊັບສາມາດຖືກຊື້ເພື່ອເປັນທົນທາງນຳໄປສູ່ການເອົາເງິນມາລົງທຶນໃໝ່ຫຼືປົກປິດລາຍໄດ້ຈາກອາຊະຍາກຳ.

**ການຟອກເງິນໂດຍອີງໃສ່ການຄ້າຂາຍ**
ການຄ້າຂາຍທີ່ຖືກຕ້ອງຕາມກົດໝາຍອາດຖືກນຳມາໃຊ້ເພື່ອປົກປິດລາຍໄດ້ຈາກອາຊະຍາກຳ. ອັນນີ້ ແມ່ນວິທີການຟອກເງິນທີ່ຊັບຊ້ອນແລະອາດລວມເຖິງການຍົກຍ້າຍສິນຄ້າຜິດກົດໝາຍ, ປອມແປງເອກະສານ, ມີການເອົາເງິນເຂົ້າອອກແບບຕົບຕາ, ແລະອອກໃບລາຄາສິນຄ້າທີ່ຕ່ຳກວ່າ-ຫຼືສູງກວ່າລາຄາຈິງ.

## 3.3 ການຟອກເງິນໃນກໍລະນີຄ້າມະນຸດ

ບົດລາຍງານ *ຮ່ອງຮອຍການເງິນ: ບົດວິເຄາະກ່ຽວກັບການສືບສວນສອບສວນດ້ານການເງິນເພື່ອຕໍ່ສູ້ກັບການຄ້າມະນຸດໃນພາກພື້ນອາຊີ ປາຊີຟິກ* ໄດ້ຖືກຂຽນຂື້ນມາເພື່ອແຈ້ງໝວດນີ້ຂອງຄູ່ມື. ບົດລາຍງານໄດ້ສະໜອງພາບລວມຂອງບົດຂຽນໃຫຍ່ໆທົ່ວໂລກໃນເລື່ອງການໝູນວຽນຂອງເງິນທີ່ກ່ຽວພັນກັບການຄ້າມະນຸດ,ແລະປະສົບການເມື່ອໝໍ່ໆມານີ້ໃນການໃຊ້ກົນໄກດ້ານການເງິນໃນການຕໍ່ສູ້ກັບການຄ້າມະນຸດ. ນອກນີ້ ບົດລາຍງານກໍຍັງວິເຄາະຄໍາຕອບທີ່ຕອບຕໍ່ຄໍາຖາມສໍາຫຼວດ, ລວມທັງບັນດາກໍລະນີສຶກສາ, ຈາກປະເທດສະມາຊິກຂອງ ບາລີ ໂປຣເຊສ໌.

ບົດລາຍງານໄດ້ແຈ້ງຈຸດສໍາຄັນວ່າຂໍ້ມູນແລະສະຖິຕິກ່ຽວກັບການຄ້າມະນຸດແລະການໝູນວຽນຂອງເງິນທີ່ກ່ຽວຂ້ອງ ທັງໃນທົ່ວໂລກແລະໃນພາກພື້ນອາຊີປາຊີຟິກຍັງມີຈໍາກັດ. ມີວິທີສອບຖາມເລື່ອງການໝູນວຽນຂອງເງິນທີ່ກ່ຽວພັນກັບການຄ້າມະນຸດ ຢູ່ສອງວິທີ: ການໝູນວຽນຂອງທຶນທີ່ຜິດກົດໝາຍທີ່ຟອກໂດຍຜູ້ຄ້າ; ແລະການໝູນວຽນຂອງທຶນຈາກຜູ້ທີ່ຖືກນໍາມາຄ້າ, ໂດຍສະເພາະຜ່ານການໃຊ້ບໍລິການໂອນເງິນເພື່ອສົ່ງເງິນໄປໃຫ້ຄອບຄົວໃນປະເທດດັ້ງເດີມຂອງຕົນ, ຫຼືຜ່ານການໃຊ້ບັນຊີທະນາຄານຫຼືບໍລິການໂອນເງິນເພື່ອຈຸດປະສົງໃນການຈ່າຍ 'ໜີ້' ໃຫ້ແກ່ຜູ້ຄ້າ.

ໂດຍສະເພາະຂໍ້ມູນກ່ຽວກັບການໝູນວຽນຂອງເງິນຈາກຜູ້ທີ່ຖືກນໍາມາຄ້ານັ້ນແມ່ນຈໍາກັດຫຼາຍ. ຂໍ້ມູນອັນນີ້ອາດຈະມີຄ່າຢ່າງສູງເພື່ອໃຊ້ວິທີ ສຸມການສັງເກດໃສ່ຜູ້ຮັບເຄາະ, ແລະເມື່ອພິຈາລະນາຮູບແບບສະເພາະຂອງການຄ້າມະນຸດ (ຕົວຢ່າງ, ການຄ້າປະເວນີ). ການຄົ້ນຄວ້າໃນປັດຈຸບັນແລະເອກະສານທີ່ພິມເຜີຍແຜ່ຂອງລັດຖະບານກໍໄດ້ສຸມໃສ່ຮູບແບບວິທີການຟອກເງິນ, ແລະພິຈາລະນາການຄ້າມະນຸດແລະການນໍາເອົາຄົນຕ່າງຊາດເຂົ້າ-ອອກປະເທດພາຍໃຕ້ເຄືອຂ່າຍອັນດຽວກັນ. ອັນນີ້ ເປັນຜົນໃຫ້ຮູ້ການບັນລະຍາຍຂອງຮູບແບບວິທີການແລະສິ່ງຊີ້ແນະອາຊະຍາກໍາຊະນິດນີ້ ແບບກວ້າງໆ. ຂໍ້ມູນແລະການວິເຄາະທີ່ດີກວ່ານີ້ຍັງເປັນທີ່ຕ້ອງການຫຼາຍເພື່ອຈະໄດ້ຊຸກຍູ້ການປະເມີນຄວາມສ່ຽງທີ່ສາມາດໃຫ້ການຊີ້ນໍາຕໍ່ການຕອບຮັບຕໍ່ຄວາມຍຸຕິທໍາເລື່ອງອາຊະຍາກໍາແລະການປະກອບສ່ວນຈາກພາກສ່ວນເອກະຊົນຕໍ່ການຕອບຮັບນັ້ນ.

ບົດລາຍງານ *ຮ່ອງຮອຍການເງິນ* ຍັງໄດ້ສະແດງໃຫ້ເຫັນຕົວຢ່າງໃນສາກົນເມື່ອໝໍ່ໆນີ້ກ່ຽວກັບການເປັນຄູ່ຮ່ວມງານຂອງພາກສ່ວນເອກະຊົນໃນການສືບຫາການຄ້າມະນຸດ, ສະໜັບສະໜູນການດໍາເນີນຄະດີຜູ້ຄ້າມະນຸດຈົນໄດ້ຮັບຜົນສໍາເລັດ, ແລະເຮັດໃຫ້ລະບົບການເງິນເພື່ອນໍາມາໃຊ້ໃນທາງຜິດກົດໝາຍຫຍຸ້ງຍາກຂຶ້ນ. ການເປັນຄູ່ຮ່ວມງານແບບນີ້ໄດ້ສະແດງໃຫ້ເຫັນເຖິງທ່າແຮງອັນໃຫຍ່ຫຼວງເພື່ອການນໍາເອົາພາກສ່ວນເອກະຊົນມາຮ່ວມໃນຖານະເປັນແນວໜ້າຕໍ່ສູ້ກັບການຄ້າມະນຸດ, ແລະໃຊ້ຄວາມຮູ້ທີ່ກ່ຽວຂ້ອງແລະປະສົບການເພື່ອສະໜັບສະໜູນການສືບສວນສອບສວນແລະການດໍາເນີນຄະດີ.

ຄໍາຕອບຕໍ່ຄໍາຖາມຈາກປະເທດສະມາຊິກຂອງ ບາລີ ໂປຣເຊສ໌ ໄດ້ລະບຸວິທີການຫຼັກຂອງການຟອກເງິນລາຍໄດ້ໃນການຄ້າມະນຸດໃນພາກພື້ນດັ່ງນີ້:

- ໃຊ້ວິທີເອົາເງິນເຂົ້າອອກໃນຈໍານວນເງິນຕໍ່າ (ສ່ວນຫຼາຍແມ່ນຕໍ່າກວ່າຈໍານວນທີ່ຕ້ອງແຈ້ງ)
- ໃຊ້ຜູ້ບໍລິການໂອນເງິນຫຼືມູນຄ່າເງິນ
- ປະສົມລາຍໄດ້ຜິດກົດໝາຍເຂົ້າກັບລາຍໄດ້ຈາກທຸລະກິດທີ່ຖືກຕ້ອງຕາມກົດໝາຍ, ແລະ
- ການໂອນເງິນຈາກລາຍໄດ້ຜິດກົດໝາຍໄປໃຫ້ຄົນອື່ນ.

ຄໍາຕອບຕໍ່ຄໍາຖາມສໍາຫຼວດຍັງໄດ້ລະບຸອີກວ່າສິ່ງຊີ້ແນະດ້ານການເງິນແມ່ນໃນກໍລະນີທີ່ແບບການດໍາລົງຊີວິດຂອງຄົນຜູ້ນັ້ນບໍ່ສົມກັບລາຍໄດ້ທີ່ໄດ້ທີ່ມາຈາກແຫຼ່ງທີ່ເໝາະສົມ. ການສືບສວນສອບສວນໂດຍອີງກອນບັງຄັບໃຊ້ກົດໝາຍ, ລາຍງານການເຄື່ອນໄຫວເງິນທີ່ໜ້າສົງໄສທີ່ບັນທຶກໂດຍສະຖາບັນການເງິນແລະການຕໍ່ວ່າຈາກຜູ້ຮັບເຄາະແມ່ນວິທີການທີ່ເກີດຂຶ້ນຫຼາຍທີ່ສຸດ, ຫຼືການຟອກເງິນທີ່ກ່ຽວຂ້ອງກັບການຄ້າມະນຸດ, ໄດ້ຖືກສືບຫາໄດ້.[11]

11 Ibid p.35

# ໝວດທີ 4:
# ໜ່ວຍສືບສວນເລື່ອງເງິນ (FIUs)

## 4.1 ລັດຖະບານລະບຸກິດຈະກຳການຟອກເງິນ ວິທີໃດ?

FIUs ມີພາລະບົດບາດອັນສຳຄັນໃນການເປັນເຈົ້າການການນຳໃຊ້ວິທີການ 'ຕິດຕາມເງິນ' ທີ່ມີປະສິດທິຜົນ. ເພື່ອຄົ້ນພົບວ່າບຸກຄົນຜູ້ໜຶ່ງຫຼືນິຕິບຸກຄົນໜຶ່ງໄດ້ຟອກເງິນ, ລັດຖະບານຕ້ອງການຂໍ້ມູນຈາກສະຖາບັນການເງິນແລະສະຖາບັນທີ່ບໍ່ແມ່ນ-ການເງິນອື່ນໆ ແລະ ຈາກວິຊາຊີບຕ່າງໆ, ເຊັ່ນກາສີໂນ, ຜູ້ປະກອບການໃຫ້ບໍລິການແກ່ບໍລິສັດ, ທະນາຍຄວາມ ແລະ ນັກບັນຊີ. ມາດຕະຖານ ຕ້ານ-ການຟອກເງິນໄດ້ກຳນົດອອກມາວ່ານິຕິບຸກຄົນຕ້ອງລາຍງານການເຄື່ອນໄຫວເງິນທີ່ໜ້າສົງໄສ, ແລະ ອັນນີ້ເອີ້ນວ່າການລາຍງານໂດຍນິຕິບຸກຄົນ. ຫຼັງຈາກນັ້ນ ລັດຖະບານ, ໂດຍຜ່ານ FIU ຂອງຕົນ, ກໍຈະເອົາຂໍ້ມູນຈາກນິຕິບຸກຄົນທີ່ລາຍງານນັ້ນໂດຍຜ່ານລາຍງານທີ່ເອີ້ນວ່າການເຄື່ອນໄຫວທີ່ໜ້າສົງໄສຫຼືລາຍງານເລື່ອງລາວ. ອົງການ FIU ຈະວິເຄາະຂໍ້ມູນນີ້, ແລະສະໜອງຂໍ້ມູນໃຫ້ອົງກອນບັງຄັບໃຊ້ກົດໝາຍອື່ນໆ. ແຜນຮູບຂ້າງລຸ່ມນີ້ສະແດງໃຫ້ເຫັນການໝູນວຽນຂອງຂໍ້ມູນທີ່ສົ່ງໄປຫາແລະສົ່ງມາຈາກ FIU.




*ພາບຈາກ: ໜ່ວຍຂ່າວກອງເລື່ອງເງິນ: ພາບລວມ, ທະນາຄານໂລກ IMF, 2004* [12]

12 https://www.imf.org/external/pubs/ft/FIU/fiu.pdf

## 4.2 FIUs ມີພາລະບົດບາດຫຍັງ?

ປະເທດຕ່າງໆກໍມີ FIUs ຫຼາຍແບບແຕກຕ່າງກັນໄປ, ຂຶ້ນກັບວ່າແບບໃດທີ່ເໝາະສົມທີ່ສຸດກັບເນື້ອໃນແລະເງື່ອນໄຂຂອງຕົນ, ທຸກໆ FIUs ມີຄວາມຮັບຜິດຊອບຕໍ່ການຮັບ, ວິເຄາະ, ແລະການແຈກຈ່າຍຂອງຂ່າວກອງຂໍ້ມູນເລື່ອງເງິນ.

> FATF ຊຸກຍູ້ FIUs ໃຫ້ສະໝັກເຂົ້າເປັນສະມາຊິກໃນກຸ່ມ **Egmont Group ຂອງ FIUs**— ອົງກອນລະດັບໂລກຂອງ 152 FIUs.

ອົງປະກອບຫຼັກໃນໜ້າທີ່ຂອງ FIUs' ແມ່ນຄວາມສາມາດຂອງເຂົາເຈົ້າໃນການປະສານງານກັບຄູ່ຮ່ວມສຳລັບການແບ່ງປັນຂໍ້ມູນໂດຍຜ່ານ ເວັບທີ່ປອດໄພຂອງ (ESW).[13] ຢ່າງໃດກໍດີ, ໃນຂະນະທີ່ການແລກປ່ຽນຂໍ້ມູນລະຫວ່າງ FIUs ສາມາດໃຫ້ຂ່າວກອງຂໍ້ມູນເລື່ອງເງິນໄດ້ຢ່າງວ່ອງໄວນັ້ນ, ມັນບໍ່ສາມາດຖືກນຳໄປໃຊ້ເປັນຫຼັກຖານໃນການດຳເນີນຄະດີອາຍາໄດ້ໂດຍປາສະຈາກການເຫັນພ້ອມຂອງແຫຼ່ງຂໍ້ມູນຄື FIU.

ຂໍ້ແຕກຕ່າງອັນສຳຄັນທີ່ມີອິດທິພົນຕໍ່ເລື່ອງທີ່ວ່າ FIU ຈະມີຄວາມສາມາດສະໜັບສະໜູນການສືບສວນສອບສວນຫຼືການດຳເນີນຄະດີໄດ້ວິທີໃດນັ້ນແມ່ນຢູ່ບ່ອນວ່າ ບາງ FIUs ມີໜ້າທີ່ໃນການສືບສວນສອບສວນ, ແລະແຫ່ງອື່ນແມ່ນບໍ່ມີ. ອັນນີ້ ອາດຈະລວມເອົາອຳນາດໃນການໂຈະການເຄື່ອນໄຫວເງິນແລະຍຶດຊັບສິນ. ມີ FIUs ຫຼາຍແຫ່ງທີ່ມີພາລະບົດບາດໃນການໃຫ້ການສຶກສາແກ່ຂະແໜງອຸສາຫະກຳກ່ຽວກັບວິທີການຕ່າງໆຂອງການຟອກເງິນ, ແລະບັງຄັບໃຫ້ປະຕິບັດຕາມກົດລະບຽບຄວບຄຸມໂດຍການປັບໄໝແລະໃສ່ໂທດຖ້າບໍ່ປະຕິບັດຕາມ.

### ຂໍ້ແນະນຳ: ສົ່ງເສີມການເຂົ້າຮ່ວມເປັນເຈົ້າການຢ່າງຫ້າວຫັນກັບ FIU ຂອງທ່ານ

- ຊຸກຍູ້ໃຫ້ມີການແບ່ງປັນຂໍ້ມູນກັນລະຫວ່າງອົງກອນຢ່າງສະໝ່ຳສະເໝີ.
- ພິຈາລະນາໃຫ້ມີການສົ່ງເຈົ້າໜ້າທີ່ອອກໄປຫຼືຮັບເອົາເຈົ້າໜ້າທີ່ ຈາກ FIU ຂອງທ່ານເຂົ້າມາເສີມໃສ່ໃນອົງກອນສືບສວນສອບສວນຫຼືທີມງານສືບສວນສອບສວນພິເສດ, ຫຼືເຮັດສະຫຼັບກັນ, ເພື່ອຮັບປະກັນວ່າຈະມີການແລກປ່ຽນ ສອງ-ທາງ ໃນເລື່ອງຄວາມຮູ້ພາຍໃນແລະປະສົບການ.

## 4.3 FIU ຂອງທ່ານຈະສະໜັບສະໜູນການສືບສວນສອບສວນຂອງທ່ານໄດ້ຢ່າງໃດ?

FIUs ສາມາດສະໜອງຂໍ້ມູນອັນລ້ຳຄ່າແລະການຊ່ວຍເຫຼືອໃນການສະໜັບສະໜູນການສືບສວນສອບສວນແລະການດຳເນີນຄະດີໃນເລື່ອງຄ້າມະນຸດ. ຂ້າງລຸ່ມນີ້ແມ່ນລາຍການຮູບແບບຕ່າງໆທີ່ FIUs ສາມາດສະໜອງໃຫ້ໄດ້. ຮູບແບບຂອງ FIU ໃນປະເທດຂອງທ່ານຈະມີຜົນວ່າເຂົາຈະໃຫ້ຄວາມຊ່ວຍເຫຼືອທ່ານໄດ້ວິທີໃດແດ່. FIUs ສາມາດສະໜັບສະໜູນຄວາມພະຍາຍາມໃນການ**ສືບສວນສອບສວນ**ໂດຍການ:

- ຊຽນ**ລາຍງານຂ່າວກອງເລື່ອງເງິນ**ທີ່ສາມາດສ້າງການເຊື່ອມໂຍງລະຫວ່າງບຸກຄົນແລະນິຕິບຸກຄົນເຊິ່ງເປັນທີ່ຕ້ອງສົງໄສວ່າຈະມີສ່ວນຮ່ວມໃນການຄ້າມະນຸດແລະກິດຈະກຳອາຊະຍາກຳ.
- ສະໜອງ **ຂໍ້ມູນເລື່ອງການເງິນ** ທີ່ກ່ຽວຂ້ອງກັບລາຍງານການເຄື່ອນໄຫວເງິນທີ່ໜ້າສົງໄສ, ລາຍງານການເຄື່ອນໄຫວເງິນສົດທີ່ໜ້າສົງໄສ, ລາຍງານການຍົກຍ້າຍເງິນຂ້າມພົມແດນ, ແລະຂໍ້ມູນທີ່ກ່ຽວຂ້ອງອື່ນໆ. ອັນນີ້ ອາດຈະຊ່ວຍທ່ານໃນການ**ລະບຸຜູ້ກະທຳຄວາມຜິດທາງອາຍາ** ແລະ ອາດຈະ **ສະໜັບສະໜູນການສືບສວນສອບສວນອັນປັດຈຸບັນ** ຫຼື **ສ້າງກໍລະນີໃໝ່ຂຶ້ນ.**
  - **ການລະບຸການເຄື່ອນໄຫວເງິນທີ່ໜ້າສົງໄສໄດ້ແຕ່ຕົ້ນໆ** ສາມາດເປັນເຄື່ອງຊ່ວຍນຳໄປສູ່ການປ້ອງກັນບໍ່ໃຫ້ເກີດຄວາມປະພຶດຜິດທາງອາຍາຂຶ້ນ, ຕົວຢ່າງ ໃນກໍລະນີຂອງການກໍ່ການຮ້າຍ, ຫຼື ສະແດງໃຫ້ເຫັນວ່າມີພຶດຕິກຳອາຊະຍາກຳທີ່ກຳລັງຈະເກີດຂຶ້ນ, ເຊັ່ນຈະມີການຈ່າຍເງິນໃຫ້ຜູ້ຄ້າມະນຸດ.
- **ໃນບາງອຳນາດທາງກົດໝາຍ, ກໍອະນຸຍາດໃຫ້ໂຈະບັນຊີແລະຍຶດຊັບສິນ,** ແລະໃນບາງກໍລະນີ, ກໍໃຫ້ **ຢຸດການເຄື່ອນໄຫວເງິນເປັນເວລາລະຍະໜຶ່ງ.** ອັນນີ້ ອາດຈະຊ່ວຍທ່ານໃຫ້ກັກກັນເງິນນັ້ນໄວ້ກ່ອນ ເພື່ອເປີດໂອກາດໃຫ້ທ່ານໄດ້ທຳການສອບຖາມເພີ່ມເຕີມເພື່ອໃຫ້ໄດ້ທິດສະດີທີ່ແຂງແກ່ງ.
- **ສະໜອງຄວາມຊ່ຽວຊານດ້ານການເງິນເພື່ອສະໜັບສະໜູນການສືບສວນສອບສວນຂອງທ່ານ** - ຕົວຢ່າງ, FIU ຂອງທ່ານອາດຈະສາມາດສະໜອງບໍລິການດ້ານກວດສອບບັນຊີເພື່ອສືບສວນສອບສວນແລະວິເຄາະຫຼັກຖານດ້ານການເງິນ, ແລະໃນບາງຄັ້ງ, ຈະຊ່ວຍໃນການດຳເນີນຄະດີ.

13 ໜ່ວຍຂ່າວກອງເລື່ອງເງິນ: ພາບລວມ IMF-ທະນາຄານໂລກ 2004. http://www.egmontgroup.org/about/financial-intelligence-units-fius ລາຍຊື່ຂອງປະເທດສະມາຊິກຂອງກຸ່ມ Egmont Group ກະລຸນາເບິ່ງທີ່ https://www.egmontgroup.org/en/membership/list





- **ໃຫ້ຄວາມສະດວກໃນເລື່ອງການແບ່ງປັນຂໍ້ມູນສາກົນ** ໂດຍຜ່ານການຮ່ວມມືກັບຄູ່ຮ່ວມງານຂອງເຂົາເຈົ້າ. ຕົວຢ່າງ, ບາງ FIUs ມີອໍານາດໃນການແລກປ່ຽນຂໍ້ມູນກັບບັນດາອົງກອນຮັກສາກົດໝາຍ, ແລະບາງ FIUs ກໍໄດ້ຮັບມອບໝາຍອໍານາດໃຫ້ແບ່ງປັນຂໍ້ມູນກັບອົງການສາກົນເຊັ່ນລວມມີ ຕໍາຫຼວດສາກົນ INTERPOL ແລະ ຕໍາຫຼວດສາກົນພາກພື້ນຢູໂຣບ EUROPOL.
- ໃນບາງກໍລະນີ, ຂຶ້ນກັບຮູບແບບຂອງ FIU ໃນປະເທດຂອງທ່ານ, FIU ນັ້ນອາດຈະ**ດໍາເນີນການສືບສວນສອບສວນເອົາເອງ, ຫຼື ປະກອບສ່ວນເຂົ້າໃນໜ່ວຍງານສະເພາະກິດ.**

## ຂໍ້ແນະນໍາ

ເຂົ້າຮ່ວມເປັນເຈົ້າການແຕ່ຕົ້ນໆ ກັບ FIU ຂອງທ່ານໃນການສືບສວນສອບສວນເພື່ອໃຫ້ຮູ້ວ່າເຂົາເຈົ້າຈະສາມາດສະໜັບສະໜູນທ່ານໄດ້ຢ່າງໃດແດ່.

## ຂໍ້ແນະນໍາ

ຜູ້ຕ້ອງສົງໄສຂອງທ່ານອາດຈະມີຊື່ບັນທຶກຢູ່ໃນຄັງຂໍ້ມູນຂອງ FIU ຂອງທ່ານຢູ່ແລ້ວ. ໃຫ້ພິຈາລະນາສົ່ງຄໍາຂໍໄປທີ່ FIU ເພື່ອສອບຖາມເອົາລາຍງານທີ່ມີຢູ່ແລ້ວ, ລວມທັງຂໍເອົາຈາກປະເທດອື່ນໆທີ່ຜູ້ຕ້ອງສົງໄສຂອງທ່ານໄດ້ເດີນທາງໄປຫຼືບ່ອນທີ່ເຂົາໄດ້ສົ່ງຫຼືໄດ້ຮັບເງິນຈາກຕ່າງປະເທດ.

FIUs ສາມາດສະໜັບສະໜູນຄວາມພະຍາຍາມ**ໃນດ້ານການດໍາເນີນຄະດີ** ໂດຍການ:

- **ຮັບເອົາການສອບຖາມ** ເພື່ອສະໜັບສະໜູນໄອຍະການເມື່ອມີຊ່ອງໂຫວ່ໃນຂໍ້ມູນເລື່ອງເງິນ.
- **ສະໜອງຄວາມຊ່ຽວຊານເລື່ອງເງິນເພື່ອສະໜັບສະໜູນ** ການດໍາເນີນຄະດີ, ທີ່ອາດຈະມີການພິສູດຫຼັກຖານຈາກຜູ້ຊ່ຽວຊານເພື່ອອະທິບາຍເລື່ອງການເຄື່ອນໄຫວເງິນທີ່ສັບສົນ.

FIUs ສາມາດສະໜັບສະໜູນຄວາມພະຍາຍາມໃນການປ້ອງກັນໂດຍການ:

- ສ້າງ **ຜົນຜະຫຼິດດ້ານຂ່າວກອງ**. ອັນນີ້ ລວມເຖິງຂໍ້ມູນຈາກຄູ່ຮ່ວມງານຈາກຕ່າງປະເທດ, ໂດຍຜ່ານເຄືອຂ່າຍ FIU ຫາ FIU ທີ່ສາມາດອໍານວຍການແລກປ່ຽນຂໍ້ມູນທີ່ວ່ອງໄວຜ່ານ ອໍານາດສານ (ສ່ວນຫຼາຍຈະໄວກວ່າແບບຄວາມຊ່ວຍເຫຼືອຊຶ່ງກັນແລະກັນດ້ານກົດໝາຍຫຼືຜ່ານສາຍການທູດ).
- ສ້າງ **ລາຍງານຕົວແບບ** ແລະ ເຮັດການຄົ້ນຄວ້າເພື່ອລະບຸການເຄື່ອນໄຫວເງິນແລະ ລັກສະນະບັນຊີທີ່ມີການຊີ້ບອກເຖິງການກະທໍາຜິດກົດໝາຍບາງຊະນິດ. ອັນນີ້ ຈະສາມາດຊ່ວຍເລື່ອງຄວາມພະຍາຍາມໃນການປ້ອງກັນແລະສືບສວນສອບສວນໂດຍການໃຊ້ກົດໝາຍບັງຄັບແລະຄະນະຮັບຜິດຊອບຂຽນລາຍງານ.
- **ຝຶກຝົນພະນັກງານ** ຂອງຄະນະຮັບຜິດຊອບຂຽນລາຍງານ ເພື່ອໃຫ້ຮູ້ຈັກສັງເກດການເຄື່ອນໄຫວການເງິນທີ່ໜ້າສົງໄສ.
- ສະໜອງ **ໂຄງການປູກຈິດສໍານຶກໃນຂະແໜງອຸດສາຫະກໍາ** ແລະໃຫ້ຮັບປະກັນວ່າຂະແໜງອຸດສາຫະກໍາຕ້ອງປະຕິບັດຕາມມາດຕະການປ້ອງກັນຂອງ AML ໂດຍຜ່ານການສຶກສາແລະການນໍາໃຊ້ເງື່ອນໄຂການຄວບຄຸມ.

## 4.4 ກໍລະນີສຶກສາ

**ເບື້ອງຫຼັງຄວາມເປັນມາ**

ໃນເດືອນເມສາ 2016, ສາທາລະນະຊົນໄດ້ຍິນຂ່າວເລື່ອງທີ່ມີພວກແຮງງານຕ່າງຊາດສາມຄົນຈາກປະເທດຕີມໍ-ເລສເຕທີ່ໄດ້ເສຍຊີວິດໃນປະເທດມາເລເຊຍ. ຄອບຄົວຂອງແຮງງານຄົນໜຶ່ງໃນຈຳນວນນັ້ນບໍ່ຮູ້ວ່ານາງໄດ້ໄປເຮັດວຽກຢູ່ຕ່າງປະເທດ ນັບແຕ່ນາງໄດ້ຫາຍໄປໃນວັນທີ 2 ເດືອນກັນຍາ 2015. ນູຊາ ເຕັງກາຣາ ເຂດຕາເວັນອອກ (NTT) ແມ່ນແຂວງທີ່ໃຫຍ່ເປັນທີ 9 ໃນອິນໂດເນເຊຍ ທີ່ສົ່ງແຮງງານອອກໄປເຮັດວຽກຢູ່ຕ່າງປະເທດແລະໄດ້ປະສົບບັນຫາເຄາະກໍາຈໍານວນແຮງງານຕ່າງຊາດເສຍຊີວິດສູງສຸດໃນອິນໂດເນເຊຍ. ລະຫວ່າງປີ 2015 ແລະ 2016, ມີການຄາດຄະເນວ່າ ມີຄົນ NTT ຈໍານວນ 4144 ຄົນໄດ້ຖືກສົ່ງໄປຕ່າງປະເທດ.  ໄດ້ມີການຄາດຄະເນວ່າມີ ແຮງງານຕ່າງຊາດ 99 ຄົນຈາກ NTT ໄດ້ເສຍຊີວິດໃນລະຫວ່າງປີ 2015 ຫາ 2017. ປະທານາທິບໍດີອິນໂດເນເຊຍໄດ້ອອກຄໍາສັ່ງໃຫ້ ກົມຕໍາຫຼວດແຫ່ງຊາດອິນໂດເນເຊຍ ທໍາການສືບສວນສອບສວນເບິ່ງບັນຫານີ້, ເປັນຜົນໃຫ້ມີການຈັດຕັ້ງຄະນະສະເພາະກິດດ້ານການຄ້າມະນຸດຂຶ້ນມາ, ແລະປະທານາທິບໍດີຍັງໄດ້ຊີ້ນໍາຜູ້ບັນຊາການຕໍາຫຼວດເຂດກູປັງໃຫ້ສືບສວນສອບສວນເບິ່ງກໍລະນີ. ລະຫວ່າງການສືບສວນສືບສວນ, 12 ເຄືອຂ່າຍຄ້າມະນຸດໄດ້ຖືກລະບຸ, ເຊິ່ງໄດ້ແພ່ກະຈາຍໄປທົ່ວອິນໂດເນເຊຍແລະມາເລເຊຍ.

**ການໝູນວຽນຂອງເງິນ**

ໃນລະຫວ່າງເດືອນມັງກອນ 2015 ຫາ ເດືອນສິງຫາ 2016, ເຄືອຂ່າຍໄດ້ຮັບຄວາມສໍາເລັດໃນການສົ່ງແຮງງານຕ່າງຊາດ 2279 ຄົນໄປປະເທດມາເລເຊຍ. ມູນຄ່າເງິນເຄື່ອນໄຫວທັງໝົດທີ່ເຄືອຂ່າຍໄດ້ຮັບຈາກການສົ່ງອອກຄົນເຫຼົ່ານັ້ນແມ່ນໄດ້ເຖິງ US$563,446.00. ອີງຕາມຂໍ້ມູນການເຄື່ອນໄຫວເງິນ, ຜູ້ກະທໍາຜິດທີ່ເປັນຜູ້ຈັດການກຸ່ມເອເຢັນຜິດກົດໝາຍທີ່ເດີ່ນບິນ ເອລຕາຣີ ໄດ້ຮັບເງິນເປັນຈໍານວນ US $244,125.69 ໃນລະຫວ່າງວັນທີ 1 ເດືອນມັງກອນ 2015 ເຖິງວັນທີ 8 ສິງຫາ 2016. ອັນນີ້ ແມ່ນມີການກ່ຽວພັນກັບການເຄື່ອນຍ້າຍ 1787 ຄົນໄປສູ່ມາເລເຊຍ, ສິງກະໂປ, ຮອງກົງ ແລະ ຊາອຸດີອາຣາເບຍ ເຊິ່ງໃນນັ້ນ ມີເດັກນ້ອຍ 48 ຄົນ.

### ລະບົບໝູນວຽນຂອງການຄ້າມະນຸດ



ໜ່ວຍຂ່າວກອງເລື່ອງເງິນ ຂອງອິນໂດເນເຊຍ, PPATK ໄດ້ທຳການວິເຄາະລາຍງານ 64 ການເຄື່ອນໄຫວເງິນທີ່ຕ້ອງສົງໄສ ເຊິ່ງໄດ້ສະແດງໃຫ້ເຫັນວ່າ:

- ເງິນຈຳນວນ US$13.5 ລ້ານໄດ້ຖືກຈ່າຍໂດຍມີການພົວພັນກັບ 48 ພາກສ່ວນ ທີ່ຖືກສືບສວນສອບສວນໂດຍຕຳຫຼວດ ເຂດຂອງ ກູປາງ.
- ການເຊື່ອມໂຍງຂອງເຄືອຂ່າຍຄ້າມະນຸດທີ່ດຳເນີນງານໃນ NTT.
- ການວິເຄາະໄດ້ຊ່ວຍລະບຸໃຫ້ຮູ້ຜູ້ໃຫ້ທຶນເຊິ່ງຈ່າຍເງິນອອກໃຫ້ເພື່ອການດຳເນີນວຽກງານຄ້າມະນຸດໃນ ນູຊາ ແຕັງກາຣາ ເຂດຕາເວັນອອກ.
- ການວິເຄາະໄດ້ສະໜັບສະໜູນຜູ້ສືບສວນສອບສວນໃນການຕິດຕາມຊອກຫາກຸ່ມເຄືອຂ່າຍໂດຍໃຊ້ວິທີຕິດຕາມເງິນ.

<table>
<tr><th colspan="4">ທຸງແດງ</th></tr>
<tr><th>ເລກທີ</th><th>ສິ່ງຊີ້ບອກທຸງແດງ</th><th>ພາກສ່ວນທີ່ເຮັດໃຫ້ປ່ຽນແປງ</th><th>ຕົວຢ່າງ</th></tr>
<tr><td rowspan="2">1</td><td rowspan="2">ປະຫວັດຂອງລູກຄ້າ</td><td>ພາກສ່ວນເອກະຊົນ</td><td>• ເຈົ້າຂອງ/ລູກຈ້າງ ຂອງ PPTKIS (ທັງຖືກຕ້ອງແລະຜິດກົດໝາຍ)<br>• ຜູ້ແລກປ່ຽນເງິນ<br>• ເຈົ້າຂອງ/ລູກຈ້າງ ຂອງທຸລະກິດນຳທ່ຽວແລະເດີນທາງ<br>• ທຸລະກິດສາຍການບິນ<br>• ທຸລະກິດ ຂົນສົ່ງ/ຍົກຍ້າຍ<br>• ທຸລະກິດເຊົ່າ</td></tr>
<tr><td>ພາກສ່ວນລັດຖະບານ</td><td>• ເຈົ້າໜ້າທີ່ກວດຄົນເຂົ້າ-ອອກປະເທດ<br>• ຄວາມປອດໄພດ້ານການບິນ<br>• ເຈົ້າໜ້າທີ່ທະຫານ<br>• ເຈົ້າໜ້າທີ່ຕຳຫຼວດ</td></tr>
<tr><td>2</td><td>ການເຄື່ອນໄຫວເງິນ<br>ແບບເຊື່ອງລັບ</td><td>ຄຳເວົ້າ</td><td>ບັນດາເດັກ/ເດັກ; ຄົນ; ປີ້; ເບ້ຍລ້ຽງກິນເຂົ້າ; ແມ່ບ້ານ; ຄ່າເຮັດພາສະປອດ; ການເດີນທາງ; ຄົນຮັບໃຊ້; RM; ຈ່າຍຄ່າ; ເງິນເດືອນເດັກ ຯລຯ</td></tr>
<tr><td>3</td><td>ຊ່ອງທາງ<br>ການເຄື່ອນໄຫວເງິນ</td><td>ລະບົບທະນາຄານ</td><td>• ໃຫ້ລາຄາສູງເກີນຄາດ<br>• ໂອນຜ່ານຕູ້ ATM<br>• ເຄື່ອນໄຫວຜ່ານ IB/MB<br>• ໂອນທາງໂທລະເລກ</td></tr>
<tr><td>4</td><td>ຮູບແບບ<br>ການເຄື່ອນໄຫວເງິນ</td><td>ປະສົມ-ປົນກັນ</td><td>ການປະສົມກັນຂອງທຸລະກິດຖືກຕ້ອງຕາມກົດໝາຍກັບຜົນກຳໄລທີ່ໄດ້ຈາກອາຊະຍາກຳ, ທີ່ພົບເຫັນຈາກບັນຊີຂອງຫຼາຍພາກສ່ວນທີ່ເອີ້ນກັນວ່າ ເຈົ້າຂອງ/ລູກຈ້າງ PPATKIS. ເປັນການສະແດງໃຫ້ເຫັນວ່າມີການເຊື່ອງລັບ/ປົກປິດ ທີ່ມາດັ້ງເດີມຂອງລາຍໄດ້ຈາກອາຊະຍາກຳ.</td></tr>
<tr><td>5</td><td colspan="3">ການວິເຄາະເງິນຍັງປະກອບສ່ວນໃນການຈັບຄູ່ຄວາມກົງກັນຂອງຂັ້ນຕອນຂອງກິດຈະກຳຄ້າມະນຸດ ເລີ່ມແຕ່ການລົງສະໜາມຄົ້ນຫາຄົນສະໝັກ, ທີ່ພັກ, ການເດີນທາງຈາກບ້ານເກີດ ຈົນເຖິງບ່ອນຢຸດຈັ້ງແລະໄປຕໍ່ຮອດ ເມືອງ/ປະເທດຈຸດທີ່ໝາຍ, ການປອມແປງເອກະສານ, ຈົນເຖິງຂັ້ນວາງສິນບົນແກ່ການຈັດຕັ້ງຂອງລັດຖະບານ. ການສືບສວນສອບສວນໄດ້ນຳໃຊ້ວິທີການຈັບຄູ່ໃຫ້ກົງກັນຈາກປະຫວັດຂອງເຈົ້າຂອງບັນຊີ, ວັນທີການເຄື່ອນໄຫວເງິນ, ຈຳນວນເງິນທີ່ເຄື່ອນໄຫວ ແລະສະຖານທີ່ເຄື່ອນໄຫວ.</td></tr>
</table>

**ຜົນທີ່ໄດ້ຮັບ**

ເຈົ້າໜ້າທີ່ສືບສວນສອບສວນຂອງຕຳຫຼວດເຂດກູປາງສາມາດທັບມ້າງ 11 ເຄືອຂ່າຍແລະລະບຸຜູ້ຕ້ອງສົງໄສໄດ້ 32 ຄົນ. ຢູ່ໃນຈຳນວນຜູ້ຕ້ອງສົງໄສ 32 ຄົນນີ້, 11 ຜູ້ຕ້ອງສົງໄສໄດ້ຖືກລົງອາຍາຈາກສານຖານຄ້າມະນຸດ, ໂດຍຖືກຕັດສິນຈຳຕິດຄຸກລະຫວ່າງ 2 ຫາ 9 ປີ. ນອກນີ້ ສານຍັງໄດ້ປັບໄໝລົງໂທດເປັນເງິນຈຳນວນລະຫວ່າງ US$9,230.00 ຫາ US$153,800.00 ແລະໄດ້ຊົດໃຊ້ໃຫ້ແກ່ຜູ້ຮັບເຄາະແລະຄອບຄົວຂອງຜູ້ຮັບເຄາະທີ່ເສຍຊີວິດເປັນເງິນຈຳນວນລະຫວ່າງ US$77.00 ເຖິງ US$4,230.00. ເຈົ້າໜ້າທີ່ກວດຄົນເຂົ້າ-ອອກປະເທດທີ່ເດີ່ນບິນຄົນໜຶ່ງ ໃນກໍລະນີຄ້າມະນຸດ, ໄດ້ຖືກຕັດສິນຈຳຄຸກ 4 ປີ, ປັບໄໝ US$15,300.00 ແລະຊົດໃຊ້ໃຫ້ຄອບຄົວຂອງຜູ້ຮັບເຄາະທີ່ເສຍຊີວິດເປັນເງິນຈຳນວນ US$77.00.

# ໝວດທີ 5: ການສືບສວນສອບສວນ

## 5.1 ການສືບສວນສອບສວນເລື່ອງເງິນແມ່ນຫຍັງ?

ການສືບສວນສອບສວນເລື່ອງເງິນແມ່ນເຕັກນິກໃນການສືບສວນສອບສວນທີ່ນຳມາໃຊ້ເພື່ອເກັບກຳຂໍ້ມູນ, ຂ່າວກອງແລະຫຼັກຖານຈາກແຫຼ່ງຕ່າງໆຢ່າງກວ້າງຂວາງກ່ຽວກັບປະຫວັດແລະກິດຈະກຳຂອງຜູ້ຕ້ອງສົງໄສຫຼືພະຍານໃນການດຳເນີນຄະດີອາຍາ. ການສືບສວນສອບສວນເງິນຈັບຕາເບິ່ງທຸກໆອົງປະກອບດ້ານເງິນທີ່ກ່ຽວພັນກັບອາຊະຍາກຳ, ລວມທັງເງິນທີ່ໃຊ້ລົງທຶນເຂົ້າໄປໃນການກະກຽມແລະການເຮັດອາຊະຍາກຳ, ຄ່າໃຊ້ຈ່າຍທີ່ເກີດຂຶ້ນລະຫວ່າງການເຮັດອາຊະຍາກຳ, ແລະເງິນແລະຜົນກຳໄລອື່ນໆທີ່ໄດ້ຮັບຈາກການເຮັດອາຊະຍາກຳ.

ການກະທຳຜິດຂອງການຟອກເງິນສາມາດຖືກມາໃຊ້ໃນຂັ້ນຕອນໃດໜຶ່ງຂອງຂະບວນການດ້ານເງິນ, ໂດຍມີເງື່ອນໄຂຫຼັກວ່າມີການກຳນົດໄດ້ວ່າບຸກຄົນຜູ້ທີ່ຂ້ອງກ່ຽວກັບເງິນນັ້ນ ໄດ້ຮູ້ຫຼືຄວນສົງໄສວ່າເງິນນັ້ນມາຈາກອາຊະຍາກຳຫຼືມັນມີຈຸດປະສົງທີ່ຈະຖືກນຳໄປໃຊ້ໃນການເຮັດອາຊະຍາກຳ. ສິ່ງນີ້ ສາມາດໄດ້ຮັບຄວາມສຳເລັດໄດ້ໂດຍການນຳເອົາແຫຼ່ງຂໍ້ມູນຕ່າງໆທີ່ສະຫຼຸບໄດ້ວ່າເປັນໜ້າສົງໄສຫຼືກິດຈະກຳໃດໜຶ່ງທີ່ຜິດປົກກະຕິ.

### ຂໍ້ແນະນຳ

ຈຸດປະສົງຫຼັກໃນການສືບສວນສອບສວນເງິນແມ່ນໃຫ້ສາມາດລະບຸແລະບັນທຶກ **ການເຄື່ອນໄຫວຂອງເງິນ** ໃນລະຫວ່າງລົງມືເຮັດອາຊະຍາກຳຢ່າງໜຶ່ງ, ແລະສາມາດລະບຸຜູ້ປະກອບສ່ວນຄົນອື່ນໆຢູ່ໃນອາຊະຍາກຳແລະເງິນລາຍໄດ້. ການເຊື່ອມໂຍງລະຫວ່າງຂໍ້ມູນທີ່ວ່າ ເງິນມາຈາກໃສ, ໃຜໄດ້ຮັບ, ໄດ້ຮັບເວລາໃດ, ແລະມັນຖືກເກັບຮັກສາຫຼືຝາກໄວ້ຢູ່ໃສ **ສາມາດສະໜອງການພິສູດກິດຈະກຳຂອງອາຊະຍາກຳໄດ້.**

## 5.2 ທ່ານຈະສະແດງໃຫ້ເຫັນໄດ້ຢ່າງໃດວ່າເງິນໄດ້ຖືກຍົກຍ້າຍວິທີໃດແລະຖືກຍ້າຍໄປໃສ?

ການບັນທຶກໃດໆທີ່ກ່ຽວພັນເຖິງຫຼືສະແດງໃຫ້ເຫັນຮ່ອງຮອຍຂອງເຫດການທີ່ກ່ຽວຂ້ອງກັບເງິນແມ່ນສຳຄັນ. ໃນຂະນະທີ່ບາງປະເທດຍັງໃຊ້ລະບົບເສດຖະກິດເງິນສົດຢູ່ເປັນສ່ວນໃຫຍ່, ກໍເລີ່ມມີການປ່ຽນແປງຫຼາຍຂຶ້ນ, ທີ່ຄົນກຳລັງໃຊ້ລະບົບທະນາຄານແບບອີເລັກໂຕຣນິກ, ໂອນທາງສາຍ, ບັດທະນາຄານ ແລະ ການໃຊ້ບໍລິການທະນາຄານທາງອິນເຕີແນັດ - ເຊິ່ງທັງໝົດເຫຼົ່ານີ້ຈະປະຮ່ອງຮອຍບາງຢ່າງໄວ້ໃຫ້ເຫັນ. ຢ່າງໃດກໍດີ, ເຖິງວ່າຈະເປັນລະບົບເຄື່ອນໄຫວແບບເງິນສົດ ກໍຍັງຕ້ອງມີການບັນທຶກບາງຢ່າງ, ເຊັ່ນ ໃບເກັບເງິນ, ສັນຍາ, ໃບຮັບຫຼືປຶ້ມບັນຊີ, ຯລຯ. ຮູບແບບການເຄື່ອນໄຫວດັ່ງກ່າວ, ບໍ່ວ່າຈະເປັນແບບອີເລັກໂຕຣນິກຫຼືແບບອື່ນ, ແລະການບັນທຶກທີ່ກ່ຽວຂ້ອງ, ກໍໄດ້ສະໜອງຜູ້ສືບສວນສອບສວນໃຫ້ໄດ້ແຫຼ່ງຂໍ້ມູນຫຼືຫຼັກຖານທີ່ເກືອບບໍ່ມີທີ່ສິ້ນສຸດ.

ແຫຼ່ງຂໍ້ມູນ, ຂ່າວກອງຫຼືຫຼັກຖານທີ່ກ່ຽວກັບການເຄື່ອນໄຫວເງິນ, ຫຼືຄຸນຄ່າທີ່ເປັນເງິນ, ຈະແຕກຕ່າງກັນໄປຂຶ້ນກັບຮູບແບບຂອງການສືບສວນສອບສວນ. ຢ່າງໃດກໍດີ, ໃນການສືບສວນສອບສວນ ສ່ວນໃຫຍ່, ແຫຼ່ງຂໍ້ມູນທົ່ວໄປຈຳນວນໜຶ່ງແມ່ນໄດ້ໃຊ້ເປັນປະຈຳ. ສິ່ງນີ້ລວມເຖິງ, ແຕ່ບໍ່ຈຳກັດແຕ່ພຽງເທົ່ານີ້:

- ຜູ້ຕ້ອງສົງໄສ (ສິ່ງພິກຕິດໂຕ)
- ການຂົນສົ່ງ / ລະບົບຂົນສົ່ງ
- ທຸລະກິດແລະອາຊີບອື່ນ
- ໂທລະສັບມືຖື
- ສະຖາບັນການເງິນ
- ສິ່ງໃຊ້ອຳນວຍຄວາມສະດວກ
- ບໍລິສັດປະກັນໄພ
- ພະແນກລົງທະບຽນປ້າຍລົດ
- ເອເຢັນເງິນສິນເຊື່ອ
- ກົມທະບຽນທີ່ດິນ
- ທາງການຈ່າຍເງິນເບ້ຍລ້ຽງ
- ທາງການພາສີອາກອນ/ສັງຄົມສົງເຄາະ
- ທາງການແລະພະແນກລົງທະບຽນຂອງລັດຖະບານ
- ບັດກຳນັນ, ເຊັ່ນບັດອອກໃຫ້ຜູ້ໂດຍສານທີ່ບິນເລື້ອຍໆ ແລະບັດສະມາຊິກໂຮງແຮມ

ມີສາມແຫຼ່ງທີ່ເປັນຈຸດເດັ່ນທີ່ຄວນສັງເກດ: (1) ສະຖາບັນການເງິນ, ເພາະວ່າມັນເປັນແຫຼ່ງທີ່ໂດດເດັ່ນທີ່ສຸດແຫຼ່ງໜຶ່ງ; (2) ໃບບິລເກັບຄ່າໃນສິ່ງອຳນວຍຄວາມສະດວກ; ແລະ (3) ບັດກຳນັນ, ເພາະວ່າມັນໃຫ້ຂໍ້ມູນອັນລ້ຳຄ່າ, ແຕ່ອາດບໍ່ຄ່ອຍຖືກໃຊ້.

**ສະຖາບັນການເງິນ**
ຂໍ້ມູນທີ່ໄດ້ມາຈາກສະຖາບັນການເງິນສາມາດແຈ້ງໃຫ້ຮູ້ເຖິງປະຫວັດຂອງການເປີດບັນຊີ (ເປັນປະໂຫຍດສຳລັບເອກະລັກທີ່ຊີ້ບົ່ງຕົວບຸກຄົນທີ່ແຈ້ງໄວ້, ວຽກງານແລະລາຍໄດ້ທີ່ແຈ້ງໄວ້), ພ້ອມກັບປະຫວັດອັນສົມບູນຂອງບັນຊີ. ໃຫ້ອັດສຳເນົາລາຍງານທະນາຄານທີ່ແຈ້ງບອກເງິນເຂົ້າ, ເງິນອອກ ແລະ ຍອດເງິນ ພ້ອມດ້ວຍເຊັກ, ບັດກຳນັນແລະເອກະສານເຄື່ອນໄຫວດ້ານການເງິນອື່ນໆທີ່ມີຢູ່, ແລະຂໍ້ບັນທຶກໃດໆທີ່ເຈົ້າໜ້າທີ່ທະນາຄານມີໃນລະຍະທີ່ເປີດບັນຊີຢູ່. ສຳລັບການໃຊ້ບັດສິນເຊື່ອເຄຣດິດແລະບັດທະນາຄານທີ່ມີເງິນຮອງຮັບ, ຂໍ້ມູນນີ້ກໍອາດເປັນປະໂຫຍດໃນການເຮັດຕາຕະລາງເບິ່ງການເຄື່ອນໄຫວຂອງຄົນຜູ້ໜຶ່ງ, ຮ້ານອາຫານຕ່າງໆທີ່ພວກເຂົາໄປກິນ,ສິນຄ້າທີ່ພວກເຂົາຊື້, ສະຖານທີ່ ທີ່ພວກເຂົາໄປເລື້ອຍໆ ແລະຄລັບຫຼືສະຖານທີ່ລື່ນເລີງສັງຄົມທີ່ເຂົາໄປຢ້ຽມຢາມ. ອັນນີ້ຈະນຳໄປສູ່ການເຫັນບັນຊີອື່ນໆ, ກຳນົດຕົວຫຼືປະຕິເສດບໍ່ຮັບຮູ້ພະຍານທີ່ອ້າງວ່າຢູ່ດ້ວຍກັນ, ຄິດໄລ່ເບິ່ງການໃຊ້ຈ່າຍແລະວິຖີການດຳລົງຊີວິດ, ແລະລະບຸຜູ້ຮ່ວມກະທຳອາຊະຍາກຳຄົນອື່ນໆ. ເມື່ອເຂົ້າເຖິງເວລາໂຕຈິງ, ຂໍ້ມູນອາດຈະຖືກນຳມາໃຊ້ເພື່ອໃຫ້ຮູ້ວ່າບຸກຄົນດັ່ງກ່າວຢູ່ໃສ.

**ໃບບິລເກັບຄ່າບໍລິການອຳນວຍຄວາມສະດວກ**
ນອກເໜືອໄປຈາກການຮູ້ບ່ອນຢູ່, ການສອບຖາມບໍລິສັດບໍລິການອຳນວຍຄວາມສະດວກສ່ວນໃຫຍ່ກໍສາມາດເປີດເຜີຍບັນຊີເກົ່າທີ່ບໍ່ເຄີຍຮູ້, ການດຳເນີນເລື່ອງເງິນຫຼືການມີຕົວຕົນຂອງຜູ້ຮ່ວມຄົນອື່ນໆທີ່ອາດຈະໄດ້ຈ່າຍຄ່າບໍລິການນັ້ນ. ໃນທຳນອງດຽວກັນ, ກໍລະນີຂອງຜູ້ໃຫ້ບໍລິການອິນເຕີແນັດແລະໂທລະສັບກໍອາດຈະນຳໄປສູ່ຕົວຕົນຂອງຄົນອື່ນໆທີ່ຢູ່ໃນຂ່າຍສົນໃຈແລະຜູ້ຮ່ວມກະທຳອາຊະຍາກຳອື່ນໆອີກດ້ວຍ.

**ບັດກຳນັນ**
ບັດສະມາຊິກລູກຄ້າທີ່ບິນເປັນປະຈຳຂອງສາຍການບິນເຊັ່ນ One World, Star Alliance ຫຼື Sky Team, ຫຼືບັດກຳນັນຕ່ອງໂສ້ຂອງໂຮງແຮມຈາກໂຮງແຮມ Hilton, Starwood ຫຼື Marriott ກໍສາມາດສະໜອງຂໍ້ມູນຢ່າງມາກມາຍ. ອັນນີ້ລວມເຖິງ: ປະຫວັດຂອງລູກຄ້າ, ເຊັ່ນຊື່ຂອງລູກຄ້າ, ທີ່ຢູ່, ອີເມລແລະເລກໂທລະສັບແລະລາຍລະອຽດຂອງບັນຊີບັດທະນາຄານ/ສິນເຊື່ອທີ່ນຳມາໃຊ້ຈ່າຍຄ່າບໍລິການ. ລາຍລະອຽດຖ້ຽວບິນ, ໂຮງແຮມທີ່ໄປພັກແລະໃຜຮ່ວມເດີນທາງໄປດ້ວຍກັນໃນລະຫວ່າງນີ້ກໍອາດຈະມີຂໍ້ມູນໃຫ້ໄດ້.

## ຂໍ້ແນະນຳ

ຜູ້ຕ້ອງສົງໄສຂອງທ່ານອາດຈະເຊື່ອງເງິນພາຍໃຕ້ຊື່ຂອງສະມາຊິກຄອບຄົວຫຼືຄົນໃກ້ຊິດແລະຜູ້ຮ່ວມງານ. ໃຫ້ໝັ້ນໃຈວ່າການສືບຄົ້ນຫາຂອງທ່ານໃຫ້ລວມເອົາຄົນພວກນີ້ເຂົ້າໄປດ້ວຍເຊິ່ງເຂົາອາດຖືຫຼືຍົກຍ້າຍເງິນຕາງໜ້າຜູ້ຕ້ອງສົງໄສຂອງທ່ານ.

## 5.3 ການເກັບກຳຂໍ້ມູນແລະຫຼັກຖານ

ເປັນວິທີການທີ່ດີທີ່ຈະກຳນົດການສືບສວນສອບສວນເງິນແບບຄຽງຄູ່ໃຫ້ເປັນການສືບສວນສອບສວນລວມຂອງການຄ້າມະນຸດ. ການປະສານງານກັນລະຫວ່າງກຸ່ມຜູ້ສືບສວນສອບສວນ, FIUs ແລະ ກຸ່ມໄອຍະການ ຈະເພີ່ມຄຸນຄ່າຕໍ່ການສືບສວນສືບສວນການຄ້າມະນຸດ, ແລະຈະຊ່ວຍປະເທດຂອງທ່ານໃຫ້ເຂົ້າເຖິງລະດັບມາດຕະຖານສາກົນໃນການຕ້ານ-ການຟອກເງິນ.

### ຂໍ້ແນະນຳ

ໃຫ້ກໍ່ຕັ້ງລະບົບ **ການສືບສວນສອບສວນເງິນຄຽງຄູ່ທີ່ຫ້າວຫັນ** ພ້ອມກັນໄປກັບການສືບສວນສອບສວນການກະທຳຜິດຖານຄ້າມະນຸດທຸກກໍລະນີຂອງທ່ານ. ຫຼັກຖານທີ່ທ່ານໄດ້ມາອາດຊ່ວຍໃຫ້ ສະຫຼຸບການກະທຳຜິດໄດ້, ແລະຍັງອາດທີ່ຈະຢືນຢັນການກະທຳຜິດຖານຟອກເງິນອັນອື່ນໄດ້ອີກ.

ອັນນີ້ ອາດສຳເລັດໄດ້ດ້ວຍການລວມເອົາ **ບັນຊີກວດສອບສຳລັບການສືບສວນສອບສວນເງິນ** ໃຫ້ເປັນພາກສ່ວນປະຈຳຂອງຂັ້ນຕອນໃນການດຳເນີນວຽກງານສືບສວນສອບສວນ.

### ຂໍ້ແນະນຳ

ໃຫ້ໝັ້ນໃຈວ່າການໂຕ້ຕອບຂອງທ່ານໄດ້ນຳເອົາ **ຄວາມຊ່ຽວຊານຈາກທຸກອົງກອນທີ່ກ່ຽວຂ້ອງ** ມາຮ່ວມ (ບັນດາຜູ້ສືບສວນສອບສວນ, FIUs, ແລະບັນດາໄອຍະການ) ເພື່ອຮັບປະກັນວ່າການກະທຳນັ້ນໄດ້ຖືກສືບສວນສອບສວນຢ່າງລົມບູນເຕັມທີ່.

ຂໍ້ມູນອາດຈະໄດ້ມາຈາກແຫຼ່ງ-ປິດ ຫຼື ແຫຼ່ງ-ເປີດກວ້າງ, ເຊັ່ນອິນເຕີເນັດແລະບໍລິສັດຫຼືຫ້ອງການບັນທຶກທະບຽນທີ່ດິນ (ເປີດກວ້າງ) ແລະຈາກສະຖາບັນການເງິນຫຼືບັນທຶກຈ່າຍພາສີອາກອນ (ປິດ).

ໃນທຸກໆກໍລະນີ, ເມື່ອເຂົ້າຫາຂໍ້ມູນ, ຜູ້ສືບສວນສອບສວນເງິນຕ້ອງປະຕິບັດວຽກງານພາຍໃນຂອບວຽກທາງກົດໝາຍພາຍໃນປະເທດຂອງຕົນແລະສາມາດສະແດງເຫດຜົນອັນສົມຄວນໄດ້ວ່າການສອບຖາມນັ້ນແມ່ນມີຂອບເຂດເໝາະສົມ, ຖືກຕ້ອງຕາມກົດໝາຍ, ຮັບຜິດຊອບແລະມີຄວາມຈຳເປັນ (PLAN) ຕໍ່ການສືບສວນສອບສວນທີ່ຕົນກຳລັງກະທຳຢູ່ນັ້ນ. ອັນນີ້ ແມ່ນຈຸດສຳຄັນທີ່ຈະສະແດງໃຫ້ເຫັນຄວາມຈຳເປັນເນື່ອງຈາກວ່າການໃຊ້ອຳນາດທີ່ກ້າວລ້າວທີ່ມີໃຫ້ຜູ້ສືບສວນສອບສວນນັ້ນ ຈະເຮັດໃຫ້ເຂົາເຈົ້າກ້າວກ່າຍຄວາມເປັນສ່ວນຕົວຂອງລູກຄ້າແລະຝ່າຝືນສິດທິພື້ນຖານຄວາມເປັນສ່ວນຕົວຂອງບຸກຄົນ. ການຄວບຄຸມແລະເງື່ອນໄຂການເຂົ້າໃຊ້ທີ່ເຄັ່ງຄັດຕ້ອງຖືກຮັກສາໄວ້ທຸກເວລາ.

### ຂໍ້ແນະນຳ: ໃຫ້ຮັບປະກັນວ່າທ່ານສາມາດສະແດງໄດ້ວ່າການສອບຖາມຂອງທ່ານແມ່ນ:

- **ຢູ່ໃນຂອບເຂດ**
  - ການກະທຳນັ້ນເຂົ້າຂ່າຍຂອບເຂດຂອງການນາບຂູ່ບໍ?
  - ມີວິທີອື່ນທີ່ກ້າວລ້າວນ້ອຍກວ່ານີ້ບໍເພື່ອບັນລຸຈຸດປະສົງ?
- **ຖືກຕ້ອງຕາມກົດໝາຍ**
  - ການກະທຳອີງໃສ່ພື້ນຖານທາງກົດໝາຍໄດ້ບໍ?
  - ການກະທຳສອດຄ່ອງກັບເງື່ອນໄຂພັນທະທາງກົດໝາຍ, ລວມທັງສິດທິມະນຸດ, ຄວາມເປັນສ່ວນຕົວ, ການຄຸ້ມຄອງຂໍ້ມູນສ່ວນຕົວແລະ ການເກັບເປັນຄວາມລັບ ບໍ?
- **ຮັບຜິດຊອບ**
  - ການຕັດສິນໃຈແມ່ນມີຄວາມຮັບຜິດຊອບບໍ?
- **ຄວາມຈຳເປັນ**
  - ການກະທຳນັ້ນມີຄວາມຈຳເປັນບໍ?
  - ຂໍ້ມູນດັ່ງກ່າວແມ່ນມີຄຸນຄ່າສຳຄັນຕໍ່ການສືບສວນສອບສວນບໍ?

ການນຳໃຊ້ ລະບົບການຈັດການກໍລະນີທີ່ມີປະສິດທິຜົນ, ບໍ່ວ່າຈະຢູ່ໃນລະດັບພື້ນຖານພຽງໃດກໍຕາມ, ກໍເປັນສິ່ງຈຳເປັນສຳລັບການສືບສວນສອບສວນເງິນ. ສ່ວນຫຼາຍແລ້ວ ປະລິມານຂອງຂໍ້ມູນທີ່ໄດ້ມາແມ່ນມີມາກມາຍ. ການບັນທຶກທີ່ແຈ້ງດີ ວ່າແມ່ນຫຍັງທີ່ໄດ້ມາ ແລະເອົາມາຈາກໃສຈະຊ່ວຍປັດເປົ່າຄວາມຫຍຸ້ງຍາກໃນພາຍຫຼັງເມື່ອຢູ່ໃນລະຫວ່າງດຳເນີນຄະດີຫຼືລະຫວ່າງຕັດສິນຄະດີ. ການບັນທຶກນະໂຍບາຍຫຼືການຕັດສິນໃຈ ກໍຈະຊ່ວຍໄດ້ເມື່ອຖືກຂໍໃຫ້ອະທິບາຍໃຫ້ເຫດຜົນໃນພາຍຫຼັງວ່າເປັນຫຍັງການກະທຳທີ່ກ້າວລ້າວບາງຢ່າງຈຶ່ງຖືກນຳມາໃຊ້.

### ⚠ ຄຳເຕືອນ

**ມີຫຼາຍກໍລະນີທີ່ສູນຫາຍໄປຍ້ອນວິທີການເກັບກຳເອກະສານທີ່ບໍ່ດີ ເນື່ອງຈາກວ່າບໍ່ສາມາດທີ່ຈະສະແດງພື້ນຖານທາງກົດໝາຍໄດ້ສຳລັບການຍຶດຫຼືການກັກກັນແບບຕ່ອງໂສ້ວ່າໄດ້ເມື່ອໃດແລະເອກະສານໄດ້ຖືກຍຶດມາຈາກໃສ.**

### ຂໍ້ແນະນຳ

ໃຫ້ໃຊ້ລະບົບຈັດການກໍລະນີເພື່ອນຳຮອຍຫາຂໍ້ມູນເງິນທີ່ທ່ານໄດ້ມາຕະຫຼອດລະຍະເວລາຂອງການສືບສວນສອບສວນຂອງທ່ານ.

### ຂໍ້ແນະນຳ

ໃຫ້ຮັບປະກັນວ່າເອກະສານທີ່ທ່ານຍຶດມານັ້ນຕ້ອງໄດ້ຖືກຊຸນປ້າຍຕິດໃສ່ແຕ່ລະຢ່າງແລະບັນທຶກໄວ້ໃນບັນທຶກການຍຶດຂອງ ແລະໃຫ້ເກັບຮັກສາໄວ້ໃນບ່ອນທີ່ປອດໄພໂດຍມີລະບົບການບັນທຶກແບບຕ່ອງໂສ້.

## 5.4 ກໍລະນີສຶກສາ

***ເມ ຈາ ຄິມ, ໄດ້ຖືກລົງອາຍາໃນອົດສະຕຣາລີຖານຟອກເງິນແລະດໍາລົງຊີວິດຈາກລາຍໄດ້ຈາກການຄ້າປະເວນີ***

ເມ ຈາ ຄິມ ໄດ້ດໍາລົງຊີວິດຢ່າງຫຼູຫຼາຈາກລາຍໄດ້ທີ່ມາຈາກໂສເພນີແມ່ຍິງກວ່າ 100ຄົນ ທີ່ລາວໄດ້ຂົນຂວາຍເອົາມາຈາກອາຊີຕາເວັນອອກສ່ຽງໃຕ້ແລະເອົາມາຢູ່ເມືອງແມວເບີນ, ປະເທດອົດສະຕຣາລີ ໂດຍໃຫ້ສັນຍາວ່າຈະໄດ້ເງິນດີແລະມີສະພາບກິນຢູ່ທີ່ດີ. ລາວບໍ່ມີໃບອະນຸຍາດເປີດທຸລະກິດຄ້າປະເວນີຫຼືມີສິດຕັດເອົາລາຍໄດ້ໃດໆ, ແຕ່ລາວກໍເຮັດ. 'ຜູ້ດູແລ' ທີ່ບໍ່ມີໃບອະນຸຍາດໄດ້ຖືກມອບໝາຍໂດຍຄິມໃຫ້ດູແລບັນດາໂສເພນີທັງຫຼາຍ ແລະຄິມກໍຈະປະຊຸມກັບເຂົາເຈົ້າ, ປຶກສາຫາລືວິທີທີ່ຈະເພີ່ມພູນວຽກທີ່ພວກແມ່ຍິງເຮັດໃຫ້ໄດ້ຫຼາຍຂຶ້ນແລະປັບໄໝຜູ້ທີ່ເຮັດວຽກບໍ່ໄດ້ເປົ້າໝາຍຕາມຄາດ. ລາວໄດ້ໃຊ້ໂທລະສັບມືຖື 12 ໜ່ວຍທີ່ໃສ່ຊື່ປອມຫຼາຍຊື່ໃນຂະນະທີ່ຖືກຕໍາຫຼວດສອບສວນ. ບັນດາຜູ້ຊ່ວຍການກະທໍາຜິດຂອງຄິມໄດ້ຊ່ວຍລາວດໍາເນີນວຽກງານໃນແຕ່-ລະ-ວັນ ຂອງພະນັກງານ, ລວມທັງການເກັບເງິນແລະຈັດລະບົບຕາຕະລາງເຮັດວຽກ. ການວິເຄາະເບິ່ງການສະຫຼຸບການຈ່າຍເງິນພະນັກງານສະໜອງໃຫ້ມີພື້ນຖານໃນການຄິດໄລ່ວ່າຄິມໄດ້ເງິນຫຼາຍປານໃດຈາກອາຊະຍາກໍາທີ່ລາວເຮັດມາແລະເປັນສາເຫດໃຫ້ລາວຖືກປັບໄໝເປັນເງິນຈໍານວນ AU$2,509,000.00.

ໂດຍການ 'ຕິດຕາມເງິນ', ບັນດາຜູ້ສືບສວນສອບສວນສາມາດສະແດງໃຫ້ເຫັນວ່າຄິມໄດ້ມີສ່ວນກ່ຽວຂ້ອງໂດຍຕົງກັບການບໍລິຫານຊ່ອງໂສເພນີແລະຄ້າມະນຸດເພື່ອດໍາເນີນທຸລະກິດຊ່ອງໂສເພນີ. ຜົນກໍາໄລທີ່ໄດ້ຈາກອາຊະຍາກໍາເຫຼົ່ານີ້ໄດ້ຖືກນໍາຮອຍ, ເຊັ່ນດຽວກັບການດໍາລົງຊີວິດທີ່ຫຼູຫຼາຂອງລາວ. ອັນນີ້ ລວມເຖິງຫ້ອງແຖວສາມຫ້ອງແລະເຮືອນໜຶ່ງຫຼັງໃນແມວເບີນ, ແລະມີລົດຫຼູຫຼາລວມທັງລົດAudi 6, Mercedes Benz E500 ແລະ Grand Jeep Cherokee ໜຶ່ງຄັນ. ອົງປະກອບສໍາຄັນທີ່ນໍາໄປສູ່ຄວາມສໍາເລັດຂອງການສືບສວນສອບສວນແມ່ນການເກັບກໍາເອົາ 'ເຈັ້ຍຈົດບັນທຶກ' ຂອງລາວທີ່ສະແດງໃຫ້ເຫັນຈໍານວນເງິນທີ່ຈ່າຍໄປໃຫ້ແມ່ຍິງແຕ່ລະຄົນໂດຍອີງຕາມຈໍານວນຂອງແຂກທີ່ເຂົາເຈົ້າຮັບໃຊ້, ແລະ ດ້ວຍການຮ່ວມມືກັນລະຫວ່າງບັນດາອົງກອນບັງຄັບໃຊ້ກົດໝາຍຂອງອົດສະຕຣາລີ.

ພາບຖ່າຍທີ່ຖ່າຍໄວ້ໃນຫ້ອງແຖວທີ່ Southbank ອັນຫຼູຫຼາຂອງນາງຄິມ ໃນລະຫວ່າງທີ່ລາວຖືກຈັບກຸມໃນປີ 2013 ສະແດງໃຫ້ເຫັນແກ້ວນໍ້າຫອມທີ່ລຽນກັນເປັນຖ້ານແຖວ, ເກີບລາຄາແພງ ຫຼູຫຼາເປັນຊັ້ນໆ, ບັນດາກະເປົ໋າຖືທີ່ມີຍີ່ຫໍ້, ແລະຕູ້ນິລະໄພສອງໜ່ວຍ.





ຈາກຜົນກໍາໄລ $2.5m ທີ່ໄດ້ມາຈາກອາຊະຍາກໍາຂອງລາວ, ຜູ້ສືບສວນສອບສວນສາມາດສະແດງໃຫ້ເຫັນວ່າຄິມໄດ້ຈ່າຍເງິນ $202,000 ໃນການຊື້ຜະລິດຕະພັນ Prada, $115,000 ຈາກ Gucci ແລະ $24,000 ຈາກ Hermes. ຜົນກໍາໄລແລະຊັບສິນເຫຼົ່ານີ້ລວມທັງຫ້ອງແຖວ, ເຮືອນ ແລະ ບັນດາລົດໄດ້ຖືກກັກແລະຜົນສຸດທ້າຍກໍໄດ້ຖືກຍຶດ ພາຍໃຕ້ *ກົດໝາຍວ່າດ້ວຍຜົນກໍາໄລຈາກອາຊະຍາກໍາ ປີ 2002* ຂອງອົດສະຕຣາລີ.

# ໝວດທີ 6: ການຮ່ວມມື ສາກົນ

*ຂໍ້ສັງເກດ: ໝວດນີ້ບໍ່ມີຈຸດປະສົງເຂົ້າເຖິງລາຍລະອຽດວ່າຕ້ອງສ້າງຄວາມຮ່ວມໄມ້ຮ່ວມມືສາກົນຢ່າງໃດ, ໂດຍອີງໃສ່ວ່າມີເອກະສານກ່ຽວກັບຫົວຂໍ້ນີ້ຢູ່ແລ້ວ. ໝວດນີ້ແມ່ນສຸມໃສ່ວ່າວິທີການໃຊ້ກົນໄກຮ່ວມມືສາກົນເພື່ອສະໜັບສະໜູນການສືບສວນສອບສວນເງິນຄືແນວໃດ.*

## 6.1 ເປັນຫຍັງການຮ່ວມມືສາກົນຈຶ່ງສຳຄັນ?

ກົນໄກການຮ່ວມມືສາກົນດ້ານອາຊະຍາກຳທີ່ມີປະສິດທິຜົນແມ່ນເຄື່ອງມືອັນຈຳເປັນໃນການຮັບມືກັບອາຊະຍາກຳຂ້າມຊາດ, ແລະເປັນຮູບແບບທີ່ສຳຄັນຂອງລະບົບຕ້ານ-ການຟອກເງິນທີ່ມີປະສິດທິຜົນ. ເຫດຜົນສຳຄັນທີ່ຕ້ອງມີການຮ່ວມມືສາກົນເພື່ອສະໜັບສະໜູນການສືບສວນສອບສວນເງິນແມ່ນດັ່ງນີ້:

- ເພື່ອເອົາຫຼັກຖານ ຈາກການດຳເນີນຄະດີອັນອື່ນ ນຳມາສະໜັບສະໜູນການສືບສວນສອບສວນ, ແລະ
- ເພື່ອລະບຸ, ຍັບຍັ້ງ, ຍຶດ ແລະ ສິ່ງສິ່ງຕ່າງໆກັບຄືນປະເທດ ເຊັ່ນ ລາຍໄດ້ຈາກອາຊະຍາກຳ ແລະ/ຫຼື ເຄື່ອງອຸປະກອນຕ່າງໆ, ແລະ/ຫຼື ຊັບສິນເພື່ອການຊົດໃຊ້ຫຼືຈ່າຍຊົດເຊີຍຄ່າເສຍຫາຍ.

## 6.2 ຮູບແບບຮ່ວມມືສາກົນທີ່ນຳມາໃຊ້ທົ່ວໄປເພື່ອສະໜັບສະໜູນການສືບສວນສອບສວນເງິນ

ກົນໄກແບບບໍ່ເປັນທາງການເປັນປະໂຫຍດຫຼາຍໃນການຊ່ວຍເຈົ້າໜ້າທີ່ໃຫ້ກຳນົດການພົວພັນແບບ ເພື່ອນ-ຕໍ່-ເພື່ອນເພື່ອເອົາຂໍ້ມູນທົ່ວພົມແດນສາກົນ. ການພົວພັນແບບບໍ່ເປັນທາງການອາດຈະເປັນປະໂຫຍດກ່ອນຂໍຄວາມຊ່ວຍຈາກວິທີການຊ່ວຍເຫຼືອຊຶ່ງກັນແລະກັນແບບເປັນທາງການ. ກົນໄກການຮ່ວມມືແບບບໍ່ເປັນທາງການ ລວມມີ:

- **ສາຍຈາກ ອົງກອນ-ຫາ-ອົງກອນ** (ອັນນີ້ ລວມເຖິງ ສາຍຈາກ ຕຳຫຼວດຫາຕຳຫຼວດ ຫຼື ເຄືອຂ່າຍ FIU ຕໍ່ FIU)
- **ສາຍຕຳຫຼວດສາກົນ** (ອັນນີ້ແມ່ນລວມເຖິງການອອກໝາຍແຈ້ງ ສືບຫາບຸກຄົນໜຶ່ງ, ເພື່ອວ່າກິດຈະກຳດ້ານການເງິນຂອງເຂົາຈະຖືກນຳຮອຍໄດ້)
- **ບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາທີ່ຄ້າຍກັນ**, ແລະ
- **ເຄືອຂ່າຍທີ່ບໍ່ເປັນທາງການ** ໃນເລື່ອງຕ້ານ-ການຟອກເງິນແລະຍຶດຊັບສິນ.
  - ກົນໄປທີ່ບໍ່ເປັນທາງການນີ້ສາມາດລວມເອົາເຄືອຂ່າຍຍຶດຊັບສິນ ເຊັ່ນ ARIN-AP (ເຄືອຂ່າຍຮ່ວມມືລະຫວ່າງອົງກອນເລື່ອງຍຶດຊັບສິນໃນພາກພື້ນອາຊີ-ປາຊີຟິກ), ຕຳຫຼວດຕໍ່ຕຳຫຼວດ (ທາງການຕຳຫຼວດທີ່ປະຈຳການຢູ່ຕ່າງປະເທດ/ເຈົ້າໜ້າທີ່ສະຖານທູດພົວພັນດ້ານກົດໝາຍ) ແລະ ກົນໄກ FIU-ຕໍ່-FIU (ເວັບໄຊ້ທີ່ປອດໄພຂອງ Egmont).

### ຂໍ້ແນະນຳ

ຊຸກຍູ້ປະເທດຂອງທ່ານໃຫ້ເຂົ້າຮ່ວມເຄືອຂ່າຍອົງກອນຮ່ວມດ້ານຍຶດຊັບສິນ - ອາຊີປາຊີຟິກ (ARIN-AP) ຖ້າວ່າຍັງບໍ່ທັນໄດ້ເຂົ້າເປັນສະມາຊິກເທື່ອ. ARIN-AP ແມ່ນເຄືອຂ່າຍຢ່າງບໍ່ເປັນທາງການຂອງກຸ່ມຜູ້ປະຕິບັດງານທີ່ສະໜັບສະໜູນຄວາມພະຍາຍາມຂອງສະມາຊິກ, ໃນລະດັບ ອົງກອນ-ຫຼາຍຝ່າຍ, ເພື່ອຍຶດເອົາຜົນກຳໄລທີ່ຜິດກົດໝາຍຂອງກຸ່ມອາຊະຍາກອນ.

ບໍ່ມີການເສຍຄ່າໃດໆໃນການເຂົ້າເປັນສະມາຊິກຂອງ ARIN-AP. ສະມາຊິກກະພາບແມ່ນເປັນການສະໝັກໃຈຢ່າງສົມບູນແລະບໍ່ມີຂໍ້ບັງຄັບໃຫ້ປະເທດສະມາຊິກຕ້ອງສະໜອງຂໍ້ມູນຫຼືຕອບຮັບຕໍ່ການຮ້ອງຂໍໃດໆ

ຂໍ້ມູນດັ່ງກ່າວສາມາດເຂົ້າໄປເບິ່ງໄດ້ທີ່ **www.arin-ap.org/main.do**

**ການຊ່ວຍເຫຼືອຊຶ່ງກັນແລະກັນທາງກົດໝາຍ** ແມ່ນວິທີການທີ່ສຳຄັນໃນການຊອກຫາຄວາມຮ່ວມໄມ້ຮ່ວມມືຢ່າງເປັນທາງການລະຫວ່າງ ລັດຖະບານ-ຕໍ່-ລັດຖະບານ ເພື່ອ**ເອົາຫຼັກຖານຈາກອຳນາດສານແຫ່ງອື່ນ.** ການຊ່ວຍເຫຼືອຊຶ່ງກັນແລະກັນແມ່ນມີຄວາມຕ້ອງການເມື່ອການຊ່ວຍເຫຼືອບໍ່ສາມາດສະໜອງໃຫ້ໄດ້ໂດຍວິທີທີ່ບໍ່ແມ່ນທາງການ, ຕົວຢ່າງ, ເມື່ອຕ້ອງການຂໍຄວາມຊ່ວຍເຫຼືອໃນການໃຊ້ວິທີການບັງຄັບ, ເມື່ອຫຼັກຖານທີ່ຂໍເອົານັ້ນຈະຖືກນຳໄປໃຊ້ຢູ່ໃນສານ, ຫຼືເມື່ອປະເທດອື່ນຂໍ ການຊ່ວຍເຫຼືອຊຶ່ງກັນແລະກັນທາງກົດໝາຍ.

ອາດຕ້ອງມີການສົ່ງຕົວເພື່ອ**ເອົາຜູ້ກະທຳຜິດນັ້ນໄປດຳເນີນຄະດີ** ເພື່ອໄປຂຶ້ນສານອາຍາຫຼືເພື່ອໄປເຂົ້າຄຸກຈາກການຕັດສິນໂທດທາງອາຍາທີ່ກ່ຽວຂ້ອງກັບການກະທຳຜິດທີ່ສາມາດສົ່ງຕົວໃຫ້ກັນໄດ້. ການຂໍໃຫ້ສົ່ງຕົວອາດເປັນປະໂຫຍດໃນການສະໜັບສະໜູນການສືບສວນສອບສວນເງິນເພື່ອຈຸດປະສົງໃນການນຳຮອຍຊັບສິນ. ຮູບແບບຢ່າງອື່ນຂອງການຮ່ວມມືສາກົນລວມເຖິງການໃສ່ຄຸກນັກໂທດ, ການຮ່ວມມືໃນການໃຊ້ເຕັກນິກດ້ານການສືບສວນສອບສວນ, ແລະການສືບສວນສອບສວນຮ່ວມກັນ.

## 6.3 ຂໍ້ພິຈາລະນາທີ່ສຳຄັນ

ຂໍ້ພິຈາລະນາຫຼັກໃນການໃຫ້ຄວາມຮ່ວມມືສາກົນເພື່ອສະໜັບສະໜູນການສືບສວນສອບສວນຂອງທ່ານລວມມີ:

- ໃຊ້ກົນໄກທີ່ບໍ່ເປັນທາງການສຳລັບການສອບຖາມເບື້ອງຕົ້ນເພື່ອຕັດສິນວ່າມີຫຼັກຖານ, ມີຜູ້ກະທຳຜິດ, ຜູ້ຮັບເຄາະ, ຫຼື ຜົນກຳໄລຈາກການຄ້າມະນຸດໃນປະເທດອື່ນບໍ.
- ປຶກສາຫາລືແຕ່ຕົ້ນໆຂອງກໍລະນີສືບສວນສອບສວນຂອງທ່ານກັບສູນກາງເພື່ອການຮ່ວມມືສາກົນ, FIU, ແລະໄອຍະການ ເພື່ອໃຫ້ເຂົ້າໃຈເຖິງສາຍແບ່ງປັນຂໍ້ມູນທີ່ເປັນທາງການແລະບໍ່ເປັນທາງການທີ່ມີຢູ່.
- ໃຫ້ພົວພັນກັນແຕ່ຕົ້ນໆກັບຄູ່ຮ່ວມງານຂອງທ່ານໃນປະເທດອື່ນ. ອັນນີ້ສາມາດຊ່ວຍໃຫ້ຄວາມກະຈ່າງແຈ້ງວ່າຈະຂໍເອົາຂໍ້ມູນຜ່ານເຄືອຂ່າຍທີ່ບໍ່ເປັນທາງການໄດ້ບໍ, ຫຼື ຕ້ອງໄດ້ຂໍຜ່ານ ອົງການໃຫ້ຄວາມຊ່ວຍເຫຼືອເຊິ່ງກັນແລະກັນດ້ານກົດໝາຍ. ນອກນີ້ ຍັງຈະສາມາດຊ່ວຍລະບຸປະເດັນທາງກົດໝາຍໃດໆທີ່ອາດເກີດຂຶ້ນ, ແລະໃຫ້ຄວາມກະຈ່າງແຈ້ງເຖິງເງື່ອນໄຂຕ່າງໆຂອງອົງການຊ່ວຍເຫຼືອເຊິ່ງກັນແລະກັນດ້ານກົດໝາຍອີກດ້ວຍຖ້າຈະທຳການຮ້ອງຂໍ.
- ຖ້າຕ້ອງຮ້ອງຂໍກັບ ອົງການຊ່ວຍເຫຼືອຊຶ່ງກັນແລະກັນດ້ານກົດໝາຍ:
  - ໃຫ້ຂໍຄວາມກະຈ່າງແຈ້ງເລື່ອງເງື່ອນໄຂຂອງປະເທດທີ່ທ່ານຂໍເອົາຂໍ້ມູນ.
  - ໃຫ້ສະແດງຂໍ້ສະເໜີຢ່າງແຈ່ມແຈ້ງວ່າທ່ານຕ້ອງການຢາກໄດ້ຫຍັງ, ແລະໃຫ້ແຈ້ງຂັ້ນຕອນທີ່ທ່ານຈະຕິດຕາມເພື່ອໃຫ້ຜົນສຳເລັດໃນເລື່ອງນີ້.
    - ອັນນີ້ ອາດລວມເຖິງ ການລະບຸຊັບສິນ, ກຳນົດວ່າໃຜເປັນເຈົ້າຂອງຜົນປະໂຫຍດ, ພິສູດວ່າເປັນການກະທຳຜິດແອບແຝງທີ່ສະຫຼຸບໄດ້, ແລະ ຂໍໃຫ້ມີການຍັບຍັ້ງ, ຍຶດໄວ້ ແລະສົ່ງຊັບສິນກັບຄືນປະເທດ.
  - ຮັບປະກັນວ່າການຮ້ອງຂໍຂອງທ່ານສົມບູນຮອບດ້ານແລະໄດ້ຍື່ນຂໍ້ມູນແລະເອກະສານທັງໝົດທີ່ປະເທດທີ່ທ່ານຮ້ອງຂໍໄປນັ້ນໃຫ້ເຂົາເຈົ້າຕາມຕ້ອງການ.
  - ໃຫ້ມີຄວາມກະຈ່າງແຈ້ງກ່ຽວກັບຮູບແບບທີ່ທ່ານຈະສະເໜີຫຼັກຖານ.
  - ສະໜອງກອບເວລາທີ່ເໝາະສົມເປັນຈິງໄດ້ສຳລັບການຕອບຮັບຕໍ່ການຮ້ອງຂໍຂອງທ່ານ (ປຶກສາກັນກ່ອນໜ້າກັບຜູ້ຮັບ).
  - ຖ້າທ່ານຈະຂໍເອົາຄຳສັ່ງໃນການຍັບຍັ້ງຫຼືຍຶດຊັບທີ່ລົງທະບຽນໃນຕ່າງປະເທດ, ໃຫ້ໝັ້ນໃຈວ່າການຂໍເອົາຄຳສັ່ງຂອງທ່ານຖືກຕ້ອງຕາມເງື່ອນໄຂຂອງລະບົບກົດໝາຍຂອງປະເທດນັ້ນ.
- ໃຫ້ຮູ້ເຖິງກອບວຽກສຳລັບການການກັກກັນແລະຍຶດຊັບໃນຕ່າງປະເທດທີ່ທ່ານກ່ຽວຂ້ອງນຳ ແລະ ຄວາມສາມາດຂອງເຂົາເຈົ້າໃນການແບ່ງປັນຊັບສິນທີ່ຍຶດມາໄດ້.

ຕົວຢ່າງໃນການໃຊ້ຄວາມຮ່ວມມືສາກົນສໍາລັບການສືບສວນສອບສວນໃນກໍລະນີຄ້າມະນຸດ:

**ຕໍາຫຼວດສົງໄສວ່າມີບັນທຶກຂອງທະນາຄານໃນຕ່າງປະເທດທີ່ອາດນໍາມາໃຊ້ໃນການດໍາເນີນຄະດີຜູ້ກະທໍາຄວາມຜິດທີ່ກ່ຽວຂ້ອງກັບການຄ້າມະນຸດ.**

ການຮ່ວມມືທີ່ບໍ່ເປັນທາງການອາດລວມມີ:
ຕໍາຫຼວດພົວພັນໄປຫາຕໍາຫຼວດທີ່ຕ່າງປະເທດແລະຂໍໃຫ້ຢັ້ງຢືນວ່າບັນທຶກຂອງທະນາຄານທີ່ຕ້ອງສົງໄສນີ້ມີໃນໂຕຈິງ.

ຕໍາຫຼວດຢັ້ງຢືນວ່າມີບັນຊີແທ້ແລະໄດ້ເນື້ອໃນຂອງບັນທຶກຂອງທະນາຄານນັ້ນ ແລະ ຕັ້ງຂໍ້ຫາຜູ້ກະທໍາຜິດ.

ການຮ່ວມມືທີ່ເປັນທາງການອາດລວມມີ:
ຜູ້ກະທໍາຜິດປະຕິເສດວ່າຜູ້ກ່ຽວບໍ່ມີການພົວພັນຫຍັງກັບບັນທຶກຂອງທະນາຄານທີ່ໄດ້ມາ. ສະນັ້ນ ໄອຍະການຕ້ອງມີບັນທຶກໃນ 'ຮູບແບບທີ່ຖືກຍອມຮັບໄດ້' ສໍາລັບການດໍາເນີນຄະດີໃນສານ.

ລັດຖະບານຍື່ນຄໍາຂໍ ການຊ່ວຍເຫຼືອເຊິ່ງກັນແລະກັນດ້ານກົດໝາຍ ກັບຕ່າງປະເທດນັ້ນໆ ເພື່ອຂໍເອົາບັນທຶກທະນາຄານໃນ 'ຮູບແບບທີ່ຖືກຍອມຮັບໄດ້'.

ລັດຖະບານຕ່າງປະເທດສະໜອງບັນທຶກໃນ 'ຮູບແບບທີ່ຖືກຍອມຮັບໄດ້'

## ຂໍ້ແນະນໍາ

ໃຫ້ປຶກສາກັບສູນກາງຂອງທ່ານ, ໄອຍະການ, ແລະ FIU ຂອງທ່ານແຕ່ຕົ້ນໆໃນການສືບສວນສອບສວນຄະດີໃດໜຶ່ງ.

## ຂໍ້ແນະນໍາ

ໃຊ້ສາຍແລກປ່ຽນຂໍ້ມູນແບບບໍ່ເປັນທາງການ ໃນລະຍະຕົ້ນ ຂອງການສືບສວນສອບສວນເພື່ອເຂົ້າຫາຂໍ້ມູນ, ຂໍຄວາມກະຈ່າງແຈ້ງວ່າມີຂໍ້ມູນຊະນິດໃດແດ່ທີ່ມີຢູ່, ໝັ້ນໃຈວ່າຮູ້ວິທີການທີ່ດີທີ່ສຸດໃນການຂໍເອົາຂໍ້ມູນເພີ່ມເຕີມທີ່ກ່ຽວຂ້ອງ, ແລະ ຕັ້ງເປົ້າໝາຍທີ່ດີຂຶ້ນຕື່ມໃນ ການຮ້ອງຂໍເອົາຂໍ້ມູນຢ່າງເປັນທາງການ.

# ໝວດທີ 7:
# ວິທີການຈ່າຍເງິນແບບໃໝ່

ເຕັກໂນໂລຢີໃໝ່ໃຫ້ແນວໂນ້ມສໍາລັບການຈ່າຍເງິນທີ່ຖືກກວ່າແລະມີປະສິດທິຜົນກວ່າໃນທົ່ວໂລກ. ຄວາມກ້າວໜ້າເຫຼົ່ານີ້ກໍສາມາດສ້າງຄວາມສ່ຽງໃນການຟອກເງິນໄດ້ເຊັ່ນກັນ, ລວມເຖິງການບໍ່ຕ້ອງລະບຸຊື່ກໍ່ມີໂອກາດສູງຂຶ້ນເມື່ອປຽບທຽບກັບວິທີການຈ່າຍເງິນແບບບໍ່ໃຊ້-ເງິນສົດ ແບບເກົ່າ. ນອກນີ້ ການເຄື່ອນໄຫວເງິນຜ່ານເຕັກໂນໂລຢີໃໝ່ ໂດຍທົ່ວໄປກໍຍັງຕົກຢູ່ນອກລະບົບຄວບຄຸມເງິນຕາອີກດ້ວຍ, ອາດປະຕິບັດກັນທົ່ວໄປໃນຫຼາຍໆປະເທດ, ແລະອາດຢູ່ພາຍໃຕ້ການກວດຂັນໃນລະດັບທີ່ແຕກຕ່າງກັນ. ຍ້ອນເຫດຜົນດັ່ງກ່າວນີ້, ເປັນສິ່ງສໍາຄັນທີ່ຜູ້ອອກນະໂຍບາຍແລະຜູ້ສືບສວນສອບສວນຕ້ອງຮູ້ວ່າລະບົບນີ້ປະຕິບັດກັນຢ່າງໃດແລະມັນອາດຈະຖືກນໍາມາໃຊ້ໂດຍຜູ້ກະທໍາຜິດອາຊະຍາກໍາວິທີໃດ. ວິທີການຈ່າຍເງິນທົ່ວໄປທີ່ນໍາໃຊ້ເຕັກໂນໂລຢີໃໝ່ລວມມີ:

**ບັດສະຫຼາດ (ບັດທີ່ເກັບຄຸນຄ່າເງິນ)**
ບັດພລາສຕິກທີ່ເບິ່ງຄ້າຍຄືກັບບັດເຄຣດິດ ແລະມີໄມໂຄຣຊິບເຊິ່ງສາມາດໃຊ້ຈ່າຍແທນເງິນສົດ, ເຮັດໃຫ້ຂັ້ນຕອນການໃຊ້ຈ່າຍເງິນນັ້ນບໍ່ຕ້ອງເຊື່ອມຕໍ່ໄປຫາບັນຊີທະນາຄານ—ຕົວຢ່າງ ບັດທີ່ຖອກເງິນໃສ່ໄວ້ກ່ອນແລະໂຫຼດເງິນໃສ່ໃໝ່ໄດ້ ເຊິ່ງສາມາດໃສ່ເງິນຕື່ມໂດຍໃຊ້ເງິນສົດຈົນຮອດລະດັບມູນຄ່າສູງສຸດ, ບັດນີ້ຈະໃຊ້ຄືກັນກັບເງິນສົດຖ້າບໍ່ໄດ້ລົງທະບຽນທາງອອນລາຍນ໌, ກໍສາມາດໃຊ້ຖອນເງິນຈາກຕູ້ ATMs ໄດ້ ແລະຊື້ເຄື່ອງທາງອອນລາຍນ໌ແລະຊື້ສິ່ງຂອງໃນ-ຮ້ານໄດ້, ແລະບໍ່ເຊື່ອມຕໍ່ໄປຫາບັນຊີທະນາຄານ.

**ຈ່າຍແບບ PayPal**
'ກະເປົ໋າເງິນດິຈິຕ້ອນ' ທີ່ສາມາດໂອນເງິນຈາກບັດສິນເຊື່ອເຄຣດິດຫຼືບັດເດບິດທີ່ມີເງິນ, ບັນຊີທະນາຄານຂອງລູກຄ້າ ແລະ/ຫຼື ໂອນຈາກບັນຊີ PayPal ໄປຫາບັນຊີຂອງຜູ້ໃຊ້ PayPal ຄົນອື່ນໆ, ເຮັດໃຫ້ຜູ້ຊື້ແລະຜູ້ຂາຍສາມາດສົ່ງແລະຮັບເງິນທາງອອນລາຍນ໌, ຫຼືໃນ-ຮ້ານ (ໃນບາງປະເທດ)

**ເງິນຕາ ຄຣິບໂຕຄາເຣັນຊີ Cryptocurrency (ຕົວຢ່າງ bitcoin)**
ເງິນຕາທີ່ປຽບສະເໝືອນເງິນຈິງໄດ້ມີການປະຕິບັດໃຊ້ຈ່າຍກັນນອກລະບົບທະນາຄານ. ການເຄື່ອນໄຫວເງິນແມ່ນເກີດຂຶ້ນລະຫວ່າງຜູ້ນໍາໃຊ້ໂດຍກົງ, ໂດຍຜູ້ໃຊ້ບໍ່ຕ້ອງແລກປ່ຽນສິ່ງຢັ້ງຢືນໂຕ. ມັນເຮັດໃຫ້ມີການເຄື່ອນໄຫວເງິນທີ່ບໍ່ຕ້ອງລະບຸຊື່ແລະຖືກປ້ອງກັນໂດຍລະຫັດຄວາມປອດໄພທີ່ຊັບຊ້ອນ. ບໍ່ມີສູນກາງທີ່ເປັນທາງການທີ່ສ້າງໜ່ວຍເງິນຕາຫຼືມີອໍານາດຮັບຮອງການເຄື່ອນໄຫວເງິນ.

**ຈ່າຍເງິນທາງໂທລະສັບມືຖື**
ວິທີຈ່າຍເງິນທາງໂທລະສັບມືຖືເຊິ່ງໂອປະເຣເຕີທໍາໜ້າທີ່ເປັນຄົນກາງທີ່ອະນຸມັດ, ລຶບລ້າງ, ແລະ ຈັດການເລື່ອງຈ່າຍເງິນ. ອັນນີ້ ແມ່ນວິທີການທົ່ວໄປເມື່ອບໍ່ມີບໍລິການທະນາຄານແບບເກົ່າຫຼືມີບໍລິການທີ່ຈໍາກັດ. ຢູ່ໃນການຈ່າຍເງິນແບບນີ້ ຈໍານວນເງິນທີ່ຖືກໂອນອາດຈະຖືກເກັບເອົາຫຼືຈ່າຍລ່ວງ-ໜ້າໃສ່ບັນຊີໂທລະສັບຫຼືມູນຄ່າເງິນອາດຈະຖືກເກັບໄວ້ໃນບັດ SIM. ຄວາມກ້າວໜ້າທາງໂທລະສັບມືຖືແລະກົນໄກສະຫຼາດຂອງເຕັກໂນໂລຢີ ໄດ້ເປັນຜົນໃຫ້ມີຄວາມສາມາດໃຊ້ເຄື່ອງມືເຫຼົ່ານີ້ຈ່າຍເງິນຜ່ານ ລະບົບເອກະລັກຄື້ນຄວາມຖີ່ວິທະຍຸ (RFID), ການສື່ສານໃກ້ສະໜາມ (NFC) ຫຼືລະບົບເຕັກໂນໂລຢີທີ່ຄ້າຍຄືກັນໂດຍບໍ່ຕ້ອງໃຊ້ບັດຫຼືໂອນຜ່ານທະນາຄານແບບເກົ່າ. ລະບົບຈ່າຍກັບ Apple ແລະ ລະບົບກະເປົ໋າເງິນກັບ Google ແມ່ນຕົວຢ່າງຂອງເຕັກໂນໂລຢີນີ້.

**ລະບົບທະນາຄານທາງອິນເຕີແນັດແລະທາງເລືອກໃນການຈ່າຍ**
ຄວາມກ້າວໜ້າທາງອິນເຕີແນັດໄດ້ເປັນຜົນໃຫ້ມີການເພີ່ມສູງຂຶ້ນຂອງບໍລິການຈ່າຍເງິນທີ່ອາໄສອິນເຕີແນັດໃນການຍົກຍ້າຍເງິນໄປຫາຫຼືຈາກບັນຊີທະນາຄານຫຼືຈາກບໍລິການຈ່າຍເງິນໂດຍສະຖາບັນທີ່ບໍ່ແມ່ນ-ທະນາຄານແລະປະຕິບັດກັນທາງອິນເຕີແນັດເທົ່ານັ້ນ. ບໍລິການແບບນີ້ເພີ່ມຄວາມສ່ຽງໃນການນໍາເອົາຄອມພິວເຕີຫຼືເຄື່ອງກົນໄກສະຫຼາດມາໃຊ້ຈ່າຍເງິນໂດຍໃຊ້ບັດເຄຣດິດຫຼືບັນຊີທີ່ຕັ້ງຂຶ້ນໃນບັນດາປະເທດທີ່ບໍ່ຄ່ອຍປະຕິບັດຕາມກົດລະບຽບຂອງລະບົບ ຄວາມຮອບຄອບຕໍ່ລູກຄ້າ (CDD) ແລະ ຮູ້ລູກຄ້າຂອງທ່ານ (KYC).

## ຂໍ້ແນະນໍາ

ໃຫ້ລະວັງເຕັກໂນໂລຢີໃໝ່ຫຼາຍແບບທີ່ໃຊ້ໂອນເງິນທີ່ມີຢູ່ໃນປັດຈຸບັນ. ໃຫ້ພົວພັນຫາ FIU ຂອງທ່ານເພື່ອຂໍຄໍາແນະນໍາໃນການວິເຄາະໃຫ້ຮູ້ວິທີການຈ່າຍເງິນແບບດັ່ງກ່າວ.

# ໝວດທີ 8: ຂໍ້ສະຫຼຸບຄຳແນະນຳ

✓ ກໍ່ຕັ້ງກຳນົດກົດໝາຍທີ່ສົມບູນຮອບດ້ານໃນການຕ້ານ-ການຟອກເງິນ

✓ ຮັບປະກັນວ່າການຟອກເງິນແລະການກະທຳຜິດແອບແຝງທີ່ສະຫຼຸບໄດ້ຢ່າງອື່ນຖືກສາມາດນຳມາດຳເນີນຄະດີໄດ້ໂດຍແຍກກັນ.

✓ ກໍ່ຕັ້ງກຳນົດ ການຍຶດຊັບໄດ້ ໂດຍບໍ່ຕ້ອງ-ມີການລົງອາຍາ.

✓ ໃຫ້ນຳໃຊ້ມາດຕະການທີ່ຫ້າວຫັນເພື່ອຮັບປະກັນວ່າການສືບສວນສອບສວນເງິນແບບປະກົບຄູ່ໄດ້ກາຍມາເປັນພາກສ່ວນປົກກະຕິຂອງທຸກໆການສອບຖາມທີ່ມີການໃຊ້ກົດໝາຍບັງຄັບ ທີ່ກ່ຽວຂ້ອງກັບອາຊະຍາກຳທີ່ມີຜົນໄດ້ທາງການເງິນ, ລວມທັງການຄ້າມະນຸດ.

✓ ເກັບກຳສະຖິຕິເລື່ອງຊັບສິນທີ່ຍຶດມາໄດ້ແລະໃຊ້ເງິນຈາກການກະທຳຜິດຖານຟອກເງິນມາທຳລາຍເຄືອຂ່າຍຄ້າມະນຸດ. ໃຫ້ພິຈາລະນາໃຊ້ສິ່ງນີ້ເປັນສິ່ງຊີ້ແນະປະເມີນຜົນງານສຳລັບການຕອບໂຕ້ຕໍ່ກໍລະນີຄ້າມະນຸດຂອງປະເທດຂອງທ່ານ.

✓ ມີການສາທິດລະດັບສູງຕໍ່ການສະໜັບສະໜູນໃນການນຳໃຊ້ວິທີການ ‘ຕິດຕາມເງິນ’ ໃນການສືບສວນສອບສວນ ເພື່ອຊຸກຍູ້ໃຫ້ມີການນຳມາປະຕິບັດຢູ່ທຸກລະດັບໃນອົງການຈັດຕັ້ງຂອງທ່ານ.

✓ ຮັບປະກັນວ່າກອບວຽກພາຍໃນປະເທດຂອງທ່ານລວມເອົາ ການຊ່ວຍເຫຼືອເຊິ່ງກັນແລະກັນດ້ານກົດໝາຍຢ່າງກວ້າງຂວາງໃນກໍລະນີຄ້າມະນຸດ, ແລະ ໃຫ້ການຟອກເງິນເປັນການກະທຳຜິດທີ່ສິ່ງຂ້າມປະເທດໄດ້ໃນກົດໝາຍພາຍໃນປະເທດຂອງທ່ານ.

✓ ຮັບປະກັນວ່າການໂຕ້ຕອບຂອງທ່ານແມ່ນໄດ້ນຳເອົາຄວາມຊ່ຽວຊານຂອງທຸກໆອົງກອນທີ່ກ່ຽວຂ້ອງ (ຜູ້ສືບສວນສອບສວນ, FIUs, ແລະໄອຍະການ) ເພື່ອຮັບປະກັນວ່າການກະທຳຜິດນັ້ນໄດ້ຖືກສືບສວນສອບສວນຢ່າງສົມບູນເຕັມທີ່.

✓ ໃຊ້ລະບົບຈັດການກໍລະນີເພື່ອນຳຮອຍເອົາຂໍ້ມູນດ້ານເງິນທີ່ທ່ານໄດ້ມາຈາກການສືບສວນສອບສວນ.

✓ ຮັບປະກັນວ່າທ່ານໄດ້ພິຈາລະນາເງື່ອນໄຂທາງກົດໝາຍທີ່ທ່ານຕ້ອງປະຕິບັດພາຍໃນເພື່ອເອົາຂໍ້ມູນ (ເຊັ່ນເງື່ອນໄຂເລື່ອງ ສິດທິມະນຸດ, ຄວາມເປັນສ່ວນຕົວ, ການຄຸ້ມຄອງຂໍ້ມູນ ແລະ ການເກັບເປັນຄວາມລັບ)

✓ ໃຊ້ເຄືອຂ່າຍແບ່ງປັນຂໍ້ມູນທີ່ບໍ່ເປັນທາງການໃນລະຍະຕົ້ນໆຂອງການສືບສວນສອບສວນຂອງທ່ານ. ໃຊ້ເຄືອຂ່າຍແບ່ງປັນຂໍ້ມູນດ້ານການເງິນ. ຊຸກຍູ້ໃຫ້ປະເທດຂອງທ່ານເຂົ້າຮ່ວມ ເຄືອຂ່າຍຮ່ວມມືລະຫວ່າງອົງກອນໃນການຍຶດຊັບ —ອາຊີປາຊີຟິກ (ARIN-AP) ຖ້າເຂົາເຈົ້າຍັງບໍ່ທັນໄດ້ເປັນສະມາຊິກເທື່ອ

✓ ເຂົ້າຮ່ວມຢ່າງຫ້າວຫັນກັບ FIU ແລະທາງການສູນກາງ ຂອງທ່ານແຕ່ຕົ້ນໆໃນການສືບສວນສອບສວນຂອງທ່ານ.

✓ ໃຫ້ລະວັງເຕັກໂນໂລຢີໃໝ່ທີ່ມີຢູ່ຢ່າງກວ້າງຂວາງທີ່ຖືກນຳມາໃຊ້ໃນການໂອນເງິນ. ພົວພັນຫາ FIU ຂອງທ່ານເພື່ອຂໍຄຳແນະນຳໃນການສືບແລະວິເຄາະວິທີການຈ່າຍເງິນດັ່ງກ່າວນັ້ນ.

# ບາລີ ໂປຣເຊສ໌

# ບາລີ ໂປຣເຊສ໌

ກ່ຽວກັບການລັກລອບເອົາຄົນເຂົ້າ-ອອກປະເທດ, ການຄ້າມະນຸດ ແລະ
ອາຊະຍາກຳຂ້າມຊາດທີ່ກ່ຽວຂ້ອງ